ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---===oo(000)oo===---

ກະຊວງ ອຸດສາຫະກຳ ແລະ ການຄ້າ

2390

ເລກທີ............/ອຄ.ກຂອ.

ນະຄອນຫຼວງວຽງຈັນ, ວັນທີ......... 15 DEC 2009

# ຂໍ້ຕົກລົງ

## ຂອງລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ວ່າດ້ວຍການປະກາດໃຊ້ລະບຽບແຫຼ່ງກຳເນີດສິນຄ້າ ສະບັບປັບປຸງໃໝ່ ເພື່ອນຳໃຊ້ຕໍ່ສິນຄ້າທີ່ໄດ້ບຸລິມະສິດອັດຕາພາສີ ນຳເຂົ້າ-ສົ່ງອອກ ລາວ-ຫວຽດ

- ອີງໃສ່ຂໍ້ຕົກລົງ ລະຫວ່າງກະຊວງ ອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ ແລະ ກະຊວງ ອຸດສາຫະກຳ ແລະ ການຄ້າແຫ່ງ ສ ສ ຫວຽດນາມ ສະບັບ ລົງວັນທີ 01 ເດືອນ ຕຸລາ 2009 ກ່ຽວກັບ ລະບຽບແຫຼ່ງກຳເນີດສິນຄ້າ ເພື່ອນຳໃຊ້ຕໍ່ສິນຄ້າທີ່ໄດ້ບຸລິມະສິດອັດຕາພາສີ ນຳເຂົ້າ-ສົ່ງອອກ ລາວ-ຫວຽດ
- ອີງໃສ່ຂໍ້ຕົກລົງ ຂອງລັດຖະມົນຕີ ວ່າການກະຊວງການຄ້າ ວ່າດ້ວຍ ການປະກາດໃຊ້ ລະບຽບການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຟອມ S ລະຫວ່າງ ສປປ ລາວ ແລະ ສສ ຫວຽດນາມ ສະບັບເລກທີ 0663/ກຄ.ຕປທ ລົງວັນທີ 16 ກໍລະກົດ 2004.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 188/ນຍ ລົງວັນທີ 17. 08. 2006 ວ່າດ້ວຍການ ຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ.
- ອີງຕາມການສະເໜີຂອງການກົມການນຳເຂົ້າ ແລະ ສົ່ງອອກ.

## ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ

ມາດຕາ 01: ປະກາດໃຊ້ລະບຽບແຫຼ່ງກຳເນີດສິນຄ້າ (Rule of Origin ຫຼື ROO) ລວມທັງລະບຽບຂັ້ນຕອນການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (Operational Certificate Procedure ຫຼື OCP) ສະບັບປັບປຸງໃໝ່ ທີ່ນຳໃຊ້ລະຫວ່າງ ສປປ ລາວ ແລະ ສສ ຫວຽດນາມ.

ມາດຕາ 02: ມອບສິດໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ແລະ ພະແນກ ອຸດສາຫະກຳ ແລະ ການຄ້າແຂວງ ທົ່ວປະເທດ ເປັນຜູ້ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຟອມ S ໃຫ້ແກ່ສິນຄ້າທີ່ໄດ້ຮັບບຸລິມະສິດ.

ມາດຕາ 03: ມອບໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ເປັນເຈົ້າການເຜີຍແຜ່ຈັດຕັ້ງປະຕິບັດ ລະບຽບການດັ່ງກ່າວ ໂດຍຮ່ວມມືກັບບັນດາຂະແໜງການທີ່ກ່ຽວຂ້ອງ.

ມາດຕາ 04: ຂໍ້ຕົກລົງສະບັບນີ້ ໃຊ້ປ່ຽນແທນຂໍ້ຕົກລົງ ສະບັບເລກທີ 0663/ກຄ.ຕປທ ລົງວັນທີ 16 ກໍລະກົດ 2004 ແລະ ມີຜົນບັງຄັບໃຊ້ ຫຼັງຈາກ 30 ວັນ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ບັນດາຂໍ້ຕົກລົງ, ແຈ້ງການ ແລະ ລະບຽບການ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ຈະຖືກລົບລ້າງໄປໃນໂຕ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ

ສົມສະຫວາດ ສະແຫວງສຶກ

ບ່ອນນຳສົ່ງ:
- ທ່ານ ລັດຖະມົນຕີ ຊ່ວຍວ່າການ "ເພື່ອລາຍງານ"
-ບັນດາ ກົມອ້ອມຂ້າງກະຊວງ "ເພື່ອຊາບ"
- ບັນດາພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ ທົ່ວປະເທດ (ເພື່ອຈັດຕັ້ງປະຕິບັດ)
- ກົມພາສີ, ກະຊວງການເງິນ "ເພື່ອຊາບ"

# ຂໍ້ຕົກລົງ

## ລະຫວ່າງ ກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ວ່າດ້ວຍ ລະບຽບແຫຼ່ງກຳເນີດສິນຄ້າ ນຳໃຊ້ຕໍ່ສິນຄ້າທີ່ໄດ້ບຸລິມະສິດ ອັດຕາພາສີ ນຳເຂົ້າ - ສົ່ງອອກ ລາວ - ຫວຽດນາມ

---

- ເພື່ອປະຕິບັດ ສັນຍາວ່າດ້ວຍການຮ່ວມມື ດ້ານເສດຖະກິດ, ວັດທະນະທຳ, ວິທະຍາສາດ ແລະ ເຕັກນິກ ທີ່ໄດ້ລົງນາມຮ່ວມກັນໃນວັນທີ 10 ມັງກອນ 2008 ລະຫວ່າງ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ.
- ອີງຕາມຂໍ້ຕົກລົງລະຫວ່າງກະຊວງການຄ້າ (ປະຈຸບັນແມ່ນ ກະຊວງອຸດສາຫະກຳ ແລະການຄ້າ) ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ກະຊວງການຄ້າ (ປະຈຸບັນແມ່ນ ກະຊວງອຸດສາຫະກຳ ແລະ ການຄ້າ) ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ກ່ຽວກັບລາຍການສິນຄ້າ ທີ່ໄດ້ຮັບບຸລິມະສິດອັດຕາພາສີນຳເຂົ້າ-ສົ່ງອອກ ລາວ-ຫວຽດ ທີ່ໄດ້ລົງນາມກັນໃນວັນທີ 28 ກໍລະກົດ 2005 ທີ່ ຮ່າໂນ້ຍ, ຫວຽດນາມ ແລະ ບັນດາຂໍ້ຕົກລົງສະບັບດັດແກ້, ເພີ່ມເຕີມໃສ່ຂໍ້ຕົກລົງສະບັບດັ່ງກ່າວ.
- ເພື່ອແນໃສ່ຊຸກຍູ້ ການຄ້າ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ແລະ ສ້າງເງື່ອນໄຂໃຫ້ແກ່ສິນຄ້າຂອງສອງປະເທດປະຕິບັດເງື່ອນໄຂໄດ້ແຫຼ່ງກຳເນີດງ່າຍດາຍກວ່າ ລະບຽບທີ່ນຳໃຊ້ໃນເມື່ອກ່ອນ ເພື່ອໄດ້ຮັບບຸລິມະສິດອັດຕາພາສີ ນຳເຂົ້າ-ສົ່ງອອກ ລາວ-ຫວຽດນາມ.

ກະຊວງອຸດສາຫະກຳ ແລະ ການຄ້າ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ແລະ ກະຊວງອຸດສາຫະກຳ ແລະການຄ້າ ສາທາລະນະລັດ ສັງຄົມນິຍົມຫວຽດນາມ (ຕໍ່ໄປນີ້ເອີ້ນວ່າ ຄູ່ສັນຍາ) ໄດ້ຕົກລົງກັນຄື :

### ມາດຕາ 1 : ສິນຄ້າທີ່ມີເງື່ອນໄຂໄດ້ຮັບບຸລິມະສິດອັດຕາພາສີ ນຳເຂົ້າ-ສົ່ງອອກ

ສິນຄ້າທີ່ຈະໄດ້ຮັບບຸລິມະສິດອັດຕາພາສີນຳເຂົ້າ-ສົ່ງອອກ ລາວ-ຫວຽດນາມ ແມ່ນສິນຄ້າທີ່ສອດຄ່ອງກັບລະບຽບແຫຼ່ງກຳເນີດສິນຄ້າ(ເອກະສານຊ້ອນທ້າຍ1), ລະບຽບຂັ້ນຕອນການຈັດຕັ້ງປະຕິບັດການອອກໃບຢັ້ງຢືນແຫຼ່ງກຳເນີດ(ເອກະສານຊ້ອນທ້າຍ4) ແລະ ຕ້ອງມີໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຟອມ S (ເອກະສານຊ້ອນທ້າຍ5) ຄັດຕິດມາພ້ອມ.

ມາດຕາ 2 : ຂອບເຂດນຳໃຊ້

ລະບຽບແຫຼ່ງກຳເນີດສິນຄ້າໃນຂໍ້ຕົກລົງສະບັບນີ້ຈະປ່ຽນແທນລະບຽບແຫຼ່ງກຳເນີດສິນຄ້າທີ່ໄດ້ກຳນົດໄວ້ໃນບັນດາຂໍ້ຕົກລົງລະຫວ່າງສອງຝ່າຍ ກ່ຽວກັບສິນຄ້າທີ່ໄດ້ຮັບບຸລິມະສິດອັດຕາພາສີນຳເຂົ້າ-ສົ່ງອອກ ລາວ-ຫວຽດ ໃນເມື່ອກ່ອນ, ຍົກເວັ້ນລະບຽບແຫຼ່ງກຳເນີດສິນຄ້າທີ່ມີສ່ວນບັນຈຸພາຍໃນທ້ອງຖິ່ນ 30% (LVC30%) ທີ່ນຳໃຊ້ສະເພາະໃຫ້ແກ່ສິນຄ້າທີ່ມີແຫຼ່ງກຳເນີດຈາກ ສປປ ລາວ ລະບຸໃນເອກະສານຊ້ອນທ້າຍ 3 ຂອງຂໍ້ຕົກລົງສະບັບນີ້.

ມາດຕາ 3 : ຜົນບັງຄັບໃຊ້

ຄູ່ສັນຍາຕ້ອງໄດ້ແຈ້ງໃຫ້ກັນຊາບຢ່າງເປັນລາຍລັກອັກສອນ ກ່ຽວກັບ ການສຳເລັດລະບຽບຂັ້ນຕອນການດຳເນີນທາງດ້ານນິຕິກຳທີ່ຈຳເປັນຂອງຕົນ ເພື່ອເຮັດໃຫ້ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້. ຂໍ້ຕົກລົງສະບັບນີ້ ຈະມີຜົນບັງຄັບໃຊ້ສຳລັບຄູ່ສັນຍາ ທີ່ໄດ້ແຈ້ງໃຫ້ຝ່າຍໜຶ່ງຊາບ ໃນມື້ທຳອິດຂອງເດືອນທີ ສາມ ນັບແຕ່ວັນທີທີ່ໄດ້ແຈ້ງການ ຂອງຄູ່ສັນຍາດັ່ງກ່າວ.

ເຮັດທີ່ນະຄອນຫຼວງຮ່າໂນ້ຍ, ວັນທີ 01 ເດືອນ 10 ປີ 2009 ເປັນສອງສະບັບຕົ້ນ (ແຕ່ລະສະບັບເປັນພາສາລາວ ແລະ ພາສາຫວຽດນາມ), ແຕ່ລະຝ່າຍຮັກສາໄວ້ 01 ສະບັບ.

ລັດຖະມົນຕີວ່າການ
ກະຊວງອຸດສາຫະກຳ ແລະ ການຄ້າ
ແຫ່ງ ສປປ ລາວ

ດຣ. ນາມ ວິຍະເກດ

ລັດຖະມົນຕີວ່າການ
ກະຊວງອຸດສາຫະກຳ ແລະ ການຄ້າ
ແຫ່ງ ສສ ຫວຽດນາມ

ດຣ. ຫວູ ຮຸຍ ຮວ່າງ

# ເອກະສານຊ້ອນທ້າຍ 1

# ລະບຽບແຫຼ່ງກຳເນີດສິນຄ້າ

## ມາດຕາ 1

### ຄຳນິຍາມຕ່າງໆ

ໃນເອກະສານຊ້ອນທ້າຍນີ້ ບັນດາຄຳສັບມີຄວາມໝາຍດັ່ງລຸ່ມນີ້:

1) **ການລ້ຽງສັດນ້ຳ** ໝາຍເຖິງການລ້ຽງສິ່ງມີຊີວິດໃນ ນ້ຳຕ່າງໆ ລວມທັງປາ, ສັດອ່ອນແຫຼວ (ເຊັ່ນ ຫອຍ), ສັດຈຳພວກກຸ້ງ ແລະ ປູ, ແລະ ສັດນ້ຳ ອື່ນໆທີ່ບໍ່ມີ ກະດູກສັນຫຼັງ ແລະ ພືດພັນທາງນ້ຳ ທີ່ມາຈາກການ ລ້ຽງເກືອ ເຊັ່ນ ໄດ້ຈາກໄຂ່, ແມງໄມ້, ລູກປາ ແລະໜອນປາ ໂດຍການດູແລ ໃນການເພາະປູກເພື່ອເພີ່ມປະສິດຕິພາບການຜະລິດເຊັ່ນ: ການຈັດເກັບ, ການໃຫ້ອາຫານ ແລະ ການປົກປ້ອງຈາກສັດຕູຕ່າງໆ;

2) **ຕົ້ນທຶນ, ຄ່າປະກັນໄພ, ຄ່າຂົນສົ່ງສິນຄ້າ (CIF)** ໝາຍເຖິງມູນຄ່າຂອງສິນຄ້າທີ່ຖືການເຂົ້າ ທີ່ ລວມທັງຄ່າປະກັນໄພ ແລະ ຄ່າຂົນສົ່ງ ຄິດໄລ່ຈົນຮອດເວລາທີ່ສິນຄ້າໄປເຖິງທ່າເຮືອຂອງປະເທດທີ່ນຳເຂົ້າ;

3) FOB ໝາຍເຖິງມູນຄ່າສິນຄ້າຢູ່ທ່າເຮືອ ຊຶ່ງລວມທັງຄ່າຂົນສົ່ງຈາກຜູ້ຜະລິດເຖິງທ່າເຮືອ ຫຼື ດ່ານສຸດທ້າຍຂອງການສົ່ງອອກ. (ລາຄາ FOB ຄິດໄລ່ໂດຍບວກມູນຄ່າວັດຖຸດິບ ຕົ້ນທຶນການຜະລິດ ຜົນກຳໄລ ແລະ ຕົ້ນທຶນອື່ນໆ);

4) **ຫຼັກການທາງດ້ານການບັນຊີທີ່ເປັນທີ່ຍອມຮັບ (GAAP)** ໝາຍເຖິງຄວາມຮັບຮູ້ທີ່ເປັນທີ່ຍອມຮັບຮ່ວມກັນ ຫຼື ວ່າໄດ້ຮັບການສະໜັບສະໜູນຢ່າງຫຼາຍຈາກຜູ້ມີອຳນາດໃນເຂດແດນຂອງຜູ້ກ່ຽວຂ້ອງ, ໂດຍຕ້ອງໃຫ້ຄວາມສຳຄັນຕໍ່ເອກະສານບັນທຶກກ່ຽວກັບລາຍໄດ້ ລາຍຮັບ, ຄ່າໃຊ້ຈ່າຍ, ຕົ້ນທຶນ, ຊັບສິນ ແລະ ໜີ້ສິນ; ການເປີດເຜີຍຂໍ້ມູນຕ່າງໆ ແລະ ການກະກຽມເອກະສານລາຍງານການເງິນ. ມາດຕະຖານນີ້ອາດ ປະກອບດ້ວຍນະໂຍບາຍທົ່ວໄປຂອງການສະໝັກແລະລວມທັງມາດຕະຖານທີ່ເປັນ ລາຍລະອຽດ, ການດຳເນີນງານ ແລະ ວິທີການດຳເນີນງານ;

5) **ສິນຄ້າ** ຈະລວມເຖິງວັດຖຸດິບ ຫຼື ຜະລິດຕະພັນທີ່ໄດ້ ມາໂດຍທຳມະຊາດ ຫຼື ການຜະລິດໄດ້ເອງທັງໝົດ ເຖິງວ່າຈະແມ່ນວັດຖຸທີ່ຕັ້ງໃຈຈະເອົາໄປນຳໃຊ້ເປັນວັດຖຸດິບໃນຂະບວນການຜະລິດອື່ນ ເພື່ອຈຸດປະສົງຂອງ ເອກະສານຊ້ອນທ້າຍ ນີ້ ຄຳນິຍາມທີ່ວ່າ ສິນຄ້າ ແລະ ຜະລິດຕະພັນ ທີ່ໄດ້ກ່າວມານີ້ສາມາດນຳໃຊ້ແທນກັນໄດ້;

6) **ວັດຖຸທີ່ຄືກັນ ແລະ ສາມາດໃຊ້ແທນກັນໄດ້** ໝາຍເຖິງ ວັດຖຸທີ່ມີລັກສະນະ ແລະ ຄຸນນະພາບທາງດ້ານການຄ້າຄ້າຍຄືກັນ ຜ່ານຂະບວນການຜະລິດທີ່ໃຊ້ເທັກນິກ ແລະ ຄຸນລັກສະນະທາງດ້ານຮ່າງກາຍພາຍນອກຄ້າຍຄືກັນ ແລະ ເມື່ອໄດ້ຮັບການປະກອບສ່ວນເຂົ້າເປັນສິນຄ້າສຳ

ເລັດຮູບແລ້ວ ຈະບໍ່ສາມາດແຍກແຫຼ່ງກຳເນີດ ໂດຍເບິ່ງຈາກເຄື່ອງໝາຍ ຫຼື ລາຍບໍ່ອອກ;

7) **ວັດຖຸ** ໝາຍເຖິງວັດຖຸດິບ ສ່ວນປະສົມ ສ່ວນປະກອບ ຫຼື ສ່ວນປະກອບຍ່ອຍ ທີ່ໄດ້ປະກອບເຂົ້າກັນມາເປັນສິນຄ້າອື່ນ ຫຼື ຜ່ານຂະບວນການຜະລິດຈົນເປັນສິນຄ້າອື່ນ;

8) **ສິນຄ້າທີ່ໄດ້ແຫຼ່ງກຳເນີດ ຫຼື ວັດຖຸທີ່ໄດ້ແຫຼ່ງກຳເນີດ** ໝາຍເຖິງສິນຄ້າ ຫຼື ວັດຖຸທີ່ມີຄຸນະສົມບັດທີ່ຈະໄດ້ແຫຼ່ງກຳເນີດທີ່ຖືກຕ້ອງຕາມຂໍ້ກຳນົດຂອງ ເອກະສານຊ້ອນທ້າຍ ນີ້;

9) **ວັດສະດຸບັນຈຸຫີບຫໍ່ ແລະ ພາຊະນະໃຊ້ໃນການຂົນສົ່ງ** ໝາຍເຖິງສິນຄ້າທີ່ໃຊ້ເພື່ອປ້ອງກັນສິນຄ້າໃນລະຫວ່າງການຂົນສົ່ງ ທີ່ແຕກຕ່າງຈາກພາຊະນະ ຫຼື ວັດສະດຸ ທີ່ໃຊ້ໃນການຂາຍຍ່ອຍ;

10) **ການຜະລິດ** ໝາຍເຖິງວິທີຂອງການໄດ້ສິນຄ້າມາ ລວມເຖິງການເຕີບໂຕ, ການຂຸດບໍ່ແຮ່, ການເກັບກ່ຽວ, ການລ້ຽງດູ ເພາະພັນ, ການສະກັດ, ການເກັບຮວບຮວມ, ການຈັບ, ການຫາປາ, ການເຮັດກັບດັກຈັບ, ການລ່າສັດ, ການຜະລິດ, ການສ້າງຂຶ້ນ ການ ຜ່ານຂະບວນການປຸງແຕ່ງ ຫຼື ການປະກອບເຂົ້າກັນເປັນສິ່ງຂອງຊະນິດໜຶ່ງ; ແລະ

11) **ລະບຽບແຫຼ່ງກຳເນີດສິນຄ້າສະເພາະຜະລິດຕະພັນ** ແມ່ນລະບຽບທີ່ກຳນົດໄວ້ສະເພາະວ່າວັດຖຸດິບໄດ້ຜ່ານການປ່ຽນລະຫັດພາສີ, ຫຼື ໄດ້ຜ່ານການຜະລິດ ຫຼື ຜ່ານຂະບວນ ການປຸງແຕ່ງ ທີ່ສະເພາະເຈາະຈົງ, ຫຼື ໄດ້ຕາມເງື່ອນໄຂທາງດານມູນຄ່າເພີ່ມ ຫຼື ການລວມກັນຂອງມາດຖານໃດໜຶ່ງ ຂອງມາດຖານເຫຼົ່ານີ້.

## ມາດຕາ 2
### ເງື່ອນໄຂການໄດ້ແຫຼ່ງກຳເນີດສິນຄ້າ

ເພື່ອຈຸດປະສົງຂອງ ເອກະສານຊ້ອນທ້າຍນີ້, ສິນຄ້ານຳເຂົ້າມາເຂດແດນຂອງປະເທດຄູ່ສັນຍາໜຶ່ງ ມີສິດໄດ້ຮັບສິດທິພິເສດທາງດ້ານພາສີ ຫາກມີເງື່ອນໄຂສອດຄ່ອງກັບລະບຽບແຫຼ່ງກຳເນີດສິນຄ້າພາຍໃຕ້ເງື່ອນໄຂຂໍ້ໃດຂໍ້ໜຶ່ງດັ່ງລຸ່ມນີ້:

1) ສິນຄ້າທີ່ໄດ້ມາ ຫຼື ຜະລິດຂຶ້ນໂດຍໃຊ້ວັດຖຸດິບພາຍໃນປະເທດຂອງຜູ້ສົ່ງອອກທັງໝົດຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 3; ຫຼື

2) ສິນຄ້າທີ່ໄດ້ມາ ຫຼື ຜະລິດຂຶ້ນໂດຍທີ່ບໍ່ໃຊ້ວັດຖຸດິບພາຍໃນປະເທດຂອງຜູ້ສົ່ງອອກທັງໝົດແຕ່ຫາກວ່າສິນຄ້ານັ້ນມີຄຸນສົມບັດສອດຄ່ອງກັບ ມາດຕາ 4 ຫຼື ມາດຕາ 6.

## ມາດຕາ 3
### ສິນຄ້າທີ່ໄດ້ມາ ຫຼື ຜະລິດຂຶ້ນໂດຍໃຊ້ວັດຖຸດິບພາຍໃນປະເທດຂອງຜູ້ສົ່ງອອກທັງໝົດ

ອີງຕາມເນື້ອໃນຂອງຂໍ້ ກ ຂອງ ມາດຕາ 2 , ສິນຄ້າຕໍ່ໄປນີ້ ໃຫ້ຖືວ່າເປັນສິນຄ້າທີ່ໄດ້ມາ ຫຼື ຜະລິດຂຶ້ນ ໂດຍໃຊ້ວັດຖຸດິບພາຍໃນປະເທດ ຂອງປະເທດຄູ່ສັນຍາຜູ້ສົ່ງອອກທັງໝົດ

1) ພືດພັນ ຫຼື ຜະລິດຕະພັນຈາກພືດ ລວມທັງ ໝາກໄມ້, ດອກໄມ້, ຜັກ, ຕົ້ນໄມ້, ສາຫຼ່າຍທະເລ, ເຊື້ອລາ ແລະ ພືດພັນທີ່ມີຊີວິດ ທີ່ເຕີບໃຫຍ່ ແລະ ເກັບກ່ຽວ, ເກັບ ຫຼື ຮອບຮອມໃນປະເທດຄູ່ສັນຍາ ຜູ້ສົ່ງອອກ;

2) ສັດມີຊີວິດ ລວມທັງສັດລ້ຽງລູກດ້ວຍນົມ, ນົກ ປາ, ສັດຈຳພວກກຸ້ງ ແລະ ປູ, ສັດອ່ອນແຫຼວ, ສັດເລືອຄານ, ເຊື້ອລາ ແລະ ເຊື້ອໄວຣັສ, ທີ່ກຳເນີດ ແລະ ລ້ຽງໃຫຍ່ໃນປະເທດ ສົ່ງອອກ;

3) ຜະລິດຕະພັນທີ່ໄດ້ມາຈາກສັດທີ່ມີຊີວິດໃນປະເທດຜູ້ສົ່ງອອກ;

4) ຜະລິດຕະພັນທີ່ໄດ້ຈາກການລ່າສັດ, ການດັກຈັບ, ການຫາປາ, ການລ້ຽງສັດບົກ ແລະ ນ້ຳ, ການເກັບຮອບຮອມ, ການຈັບ ທີ່ປະຕິບັດໃນປະເທດນັ້ນ;

5) ແຮ່ທາດ ແລະ ວັດຖຸອື່ນທີ່ເກີດຂຶ້ນຕາມທຳມະຊາດ, ບໍ່ລວມເຖິງຂໍ້ (1) ເຖິງ (4) ໃນມາດຕານີ້, ສິ່ງທີ່ສະກັດຫຼືໄດ້ມາຈາກພື້ນດິນ, ພື້ນນ້ຳ, ພື້ນທະເລ, ໃຕ້ພື້ນທະເລ ຂອງປະເທດນັ້ນ;

6) ສິນຄ້າທີ່ໄດ້ມາຈາກການຫາປາທະເລ ໂດຍເຮືອທີ່ລົງທະບຽນກັບປະເທດຄູ່ສັນຍາ ແລະ ໄດ້ຮັບສິດໃນການໃຊ້ທຸງສັນຍານຂອງປະເທດນັ້ນ ແລະ ຜະລິດຕະພັນອື່ນໆທີ່ໄດ້ຈາກ ທະເລ, ພື້ນທະເລ ຫຼື ໃຕ້ພື້ນທະເລ ພື້ນທະເລທີ່ຢູ່ທີ່ນອກເຂດປະເທດນັ້ນ ຫາກວ່າປະເທດນັ້ນມີສິດໃຊ້ຜົນປະໂຫຍດຈາກເຂດທະເລນັ້ນ ໂດຍອີງຕາມກົດໝາຍລະຫວ່າງປະເທດ;

7) ສິນຄ້າທີ່ໄດ້ມາຈາກການຫາປາທະເລ ແລະ ສິນຄ້າທາງທະເລອື່ນໆ ທີ່ໄດ້ມາຈາກທະເລຫຼວງ ໂດຍເຮືອທີ່ລົງທະບຽນກັບປະເທດສະມາຊິກ ແລະ ໄດ້ຮັບສິດໃນການໃຊ້ທຸງສັນຍານຂອງປະເທດນັ້ນ;

8) ຜະລິດຕະພັນທີ່ໄດ້ຜ່ານການປຸງແຕ່ງ ແລະ/ຫຼື ຜະລິດໃນໂຮງງານໃນເຮືອທີ່ຈົດທະບຽນກັບ ປະເທດຄູ່ສັນຍາ ແລະ ໄດ້ຮັບສິດໃນການໃຊ້ທຸງສັນຍານຂອງປະເທດນັ້ນໂດຍສະເພາະແມ່ນຜະລິດຕະພັນໃນຂໍ້ (7) ຂອງມາດຕານີ້;

9) ຜະລິດຕະພັນທີ່ຮອບຮອມໄດ້ໃນປະເທດນັ້ນ ຊຶ່ງບໍ່ສາມາດນຳໃຊ້ຕາມຈຸດປະສົງເກົ່າໄດ້ອີກຕໍ່ໄປ ແລະ ບໍ່ສາມາດຟື້ນຟູ ຫຼື ສ້ອມແຊມ ແລະ ເໝາະສົມພຽງກຳຈັດຖິ້ມ ຫຼື ເປັນ ພຽງວັດຖຸດິບບາງສ່ວນເພື່ອນຳມາໝູນໃຊ້ຄືນ;

10) ຂອງເສຍ ຫຼື ຂີ້ເຫຍື້ອ ແລະ ຂອງທີ່ເສດເຫຼືອ ທີ່ໄດ້ມາຈາກ:

   ກ) ຂະບວນການຜະລິດພາຍໃນປະເທດຄູ່ສັນຍາສົ່ງອອກ; ຫຼື

   ຂ) ສິນຄ້າທີ່ໃຊ້ແລ້ວ ແລະ ເກັບຮອບຮວມພາຍໃນປະເທດນັ້ນ ໂດຍວັດຖຸນັ້ນເໝາະສົມສຳຫຼັບການກູ້ຄືນວັດຖຸດິບເທົ່ານັ້ນ; ແລະ

11) ສິນຄ້າທີ່ໄດ້ມາ ຫຼື ຜະລິດຂຶ້ນໃນປະເທດຈາກຜະລິດຕະພັນທີ່ໄດ້ກ່າວມາຈາກ ຂໍ້ (1) ຮອດ (10) ໃນມາດຕານີ້.

## ມາດຕາ 4
## ສິນຄ້າທີ່ບໍ່ໄດ້ມາທັງໝົດ ຫຼື ຜະລິດບໍ່ໄດ້ເອງທັງໝົດ

1. ລະບຽບແຫຼ່ງກຳເນີດລວມ

(ກ) ສິນຄ້າທີ່ກຳນົດໃນ ຂໍ້ 2 ຂອງມາດຕາ 2, ໃຫ້ຖືວ່າມີແຫຼ່ງກຳເນີດ ຈາກປະເທດ ສົ່ງອອກບ່ອນທີ່ດຳເນີນການຜະລິດ ຫຼື ການປຸງແຕ່ງສິນຄ້າດັ່ງກ່າວ:

- ຖ້າຫາກວ່າສິນຄ້ານັ້ນມີສັດສ່ວນບັນຈຸທ້ອງຖິ່ນ (ຊຶ່ງຕໍ່ໄປນີ້ເອີ້ນວ່າ " ສ່ວນບັນຈຸມູນຄ່າ ລາວ-ຫວຽດ" ຫຼື "ສ່ວນບັນຈຸທ້ອງຖິ່ນ (LVC)" ) ຫາກວ່າສັດສ່ວນບັນຈຸນັ້ນບໍ່ໜ້ອຍກວ່າ 40 % ທີ່ຄິດໄລ່ໂດຍໃຊ້ສູດ ໃນມາດຕາ 5; ຫຼື
- ຖ້າຫາກວ່າວັດຖຸທັງໝົດທີ່ບໍ່ໄດ້ແຫຼ່ງກຳເນີດ ທີ່ຖືກນຳໃຊ້ໃນການຜະລິດ ໄດ້ຜ່ານຂະບວນການປ່ຽນສະພາບທາງດ້ານລະຫັດພາສີ (ຊຶ່ງຕໍ່ໄປນີ້ ເອີ້ນວ່າ "CTC" ໃນລະດັບ 4 ໂຕເລກ ( ໝາຍຄວາມວ່າມີການປ່ຽນ ລະຫັດເຄົ້າຂອງລະຫັດພາສີ) ໃນລະບົບພາສີເອກະພາບ Harmonized System.

(ຂ) ແຕ່ລະຝ່າຍຈະອະນຸຍາດໃຫ້ຜູ້ສົ່ງສິນຄ້າອອກຕັດສິນໃຈໃນການເລືອກທີ່ຈະປະຕິບັດຕາມໜຶ່ງໃນສອງລະບຽບ "LVC ບໍ່ຫຼຸດສີ່ສິບເປີເຊັນ(40%)" ຫຼື ມີການປ່ຽນລະຫັດພາສີໃນລະດັບສີ່(04) ຕົວເລກ" ທີ່ກ່າວເຖິງໃນຂໍ້ ກ ຂອງວັກທີ 1 ເພື່ອກຳນົດແຫຼ່ງກຳເນີດຂອງຕົວສິນຄ້າ.

2. ລະບຽບແຫຼ່ງກຳເນີດສະເພາະແຕ່ລະຜະລິດຕະພັນ

(ກ) ເຖິງແມ່ນວ່າຈະລະບຸຢູ່ໃນຂໍ້ທີ 1 ໃນມາດຕານີ້ກໍ່ຕາມ, ສິນຄ້າສາມາດໄດ້ແຫຼ່ງກຳເນີດ ຫາກວ່າສິນຄ້ານັ້ນ ສອດຄ່ອງກັບເງື່ອນໄຂຂອງລະບຽບແຫຼ່ງກຳ ເນີດສິນຄ້າສະເພາະຜະລິດຕະພັນ ທີ່ທັງສອງຝ່າຍຈະໄດ້ຕົກລົງກັນ.

(ຂ) ເມື່ອລະບຽບແຫຼ່ງກຳເນີດສິນຄ້າສະເພາະຜະລິດຕະພັນ ອະນຸຍາດ ໃຫ້ຜູ້ຜະລິດມີທາງເລືອກ ໃນການນຳໃຊ້ LVC, CTC, ກົດລະບຽບສະເພາະໃນຂັ້ນຕອນການຜະລິດ ແລະ ປຸງແຕ່ງ( ຕໍ່ໄປນີ້ເອີ້ນຫຍໍ້ວ່າ SP), ຫຼື ການປະສົມປະສານກັນຂອງເງື່ອນໄຂຕ່າງໆທີ່ກ່າວມາຂ້າງເທິງ ແຕ່ລະຝ່າຍ ຈະອະນຸຍາດໃຫ້ຜູ້ສົ່ງສິນຄ້າອອກຕັດສິນໃຈວ່າຈະນຳໃຊ້ລະບຽບການໃດເພື່ອກຳນົດວ່າ ສິນຄ້າຂອງຕົນ ມີແຫຼ່ງກຳເນີດສິນຄ້າ ຫຼືບໍ່.

(ຄ) ໃນກໍລະນີທີ່ລະບຽບແຫຼ່ງກຳເນີດສິນຄ້າສະເພາະຜະລິດຕະພັນ ຮຽກຮ້ອງໃຫ້ຜູ້ຜະລິດໃຊ້ວັດຖຸດິບທີ່ຜ່ານຂະບວນການ CTC ຫຼື ໃຫ້ມີກົດລະບຽບ ສະເພາະໃນການຂັ້ນຕອນການຜະລິດ ແລະ ວິທີການຜະລິດທີ່ເຈາະຈົງ, ກົດລະບຽບນີ້ຈະໃຊ້ໄດ້ສະເພາະກັບວັດຖຸດິບທີ່ບໍ່ໄດ້ແຫຼ່ງກຳເນີດສິນຄ້າເທົ່ານັ້ນ.

## ມາດຕາ 5

### ສູດການຄິດໄລ່ສັດສ່ວນບັນຈຸຂອງທ້ອງຖິ່ນ (LVC)

1. ສໍາລັບຈຸດປະສົງຂອງມາດຕາ 4, ສູດສໍາລັບການຄິດໄລ່ ສ່ວນບັນຈຸລາວ-ຫວຽດ ຫຼື (LVC) ມີດັ່ງລຸ່ມນີ້:

$$LVC = \frac{\text{ລາຄາ FOB - ມູນຄ່າວັດຖຸດິບ, ອາໄຫຼ່ ຫຼື ສິນຄ້າ ທີ່ບໍ່ໄດ້ແຫຼ່ງກໍາເນີດ}}{\text{ລາຄາ FOB}} \times 100\%$$

2. ສໍາລັບຈຸດປະສົງຂອງສູດການຄິດໄລ່ LVC ທີ່ລະບຸໃນຂໍ້ 1 ໃນມາດຕານີ້:

(ກ) ມູນຄ່າຂອງວັດຖຸດິບ, ສິ້ນສ່ວນຕ່າງໆ ຫຼື ຜະລິດຕະພັນ ທີ່ໄດ້ນໍາເຂົ້າ ທີ່ບໍ່ມີແຫຼ່ງກໍາເນີດ ຈະແມ່ນ:

- ມູນຄ່າ CIF ຂອງສິນຄ້າໃນເວລາມີການນໍາເຂົ້າ ຫຼື ສາມາດພິສູດການນໍາເຂົ້າໄດ້; ຫຼື
- ລາຄາທີ່ ແນ່ນອນ ແລະ ສອບຖາມໄດ້ລ່າສຸດສໍາລັບສິນຄ້າທີ່ບໍ່ມີແຫຼ່ງກໍາເນີດທີ່ຊັດເຈນ ໃນຂົງເຂດຂອງປະເທດຄູ່ສັນຍາ ບ່ອນທີ່ມີການຜະລິດຫຼືມີການປຸງແຕ່ງ;

(ຂ) FOB ໝາຍເຖິງມູນຄ່າສິນຄ້າຢູ່ທ່າເຮືອ ດັ່ງທີ່ໄດ້ນິຍາມໄວ້ໃນມາດຕາ 1. ລາຄາ FOB ຈະໄດ້ກໍານົດໂດຍການບວກເອົາມູນຄ່າວັດຖຸດິບ, ຕົ້ນທຶນການ ຜະລິດ, ກໍາໄລ ແລະ ຕົ້ນທຶນອື່ນໆ.

3. ວັດຖຸດິບທີ່ຫາໄດ້ຈາກທ້ອງຖິ່ນ ທີ່ໄດ້ຜະລິດຂຶ້ນເປັນສິນຄ້າ ໂດຍໂຮງງານທີ່ມີໃບອະນຸຍາດໃນການສ້າງຕັ້ງໂຮງງານຖືກຕ້ອງຕາມກົດໝາຍພາຍໃນປະເທດ, ຈະຖືວ່າເປັນ ວັດຖຸດິບທີ່ໄດ້ແຫຼ່ງກໍາເນີດຕາມຂໍ້ກໍານົດ ທີ່ລະບຸໄວ້ ໃນເອກະສານຊ້ອນທ້າຍນີ້.

## ມາດຕາ 6

### ລະບຽບແຫຼ່ງກໍາເນີດສິນຄ້າແບບສະສົມ

1. ນອກຈາກທີ່ໄດ້ລະບຸໄວ້ໃນເອກະສານຊ້ອນທ້າຍນີ້ ສິນຄ້າທີ່ໄດ້ແຫຼ່ງກໍາເນີດໃນປະເທດຄູ່ສັນຍາໜຶ່ງ ທີ່ໄດ້ຖືກນໍາໄປໃຊ້ໃນຂົງເຂດຂອງອີກປະເທດຄູ່ສັນຍາໜຶ່ງ ເພື່ອເປັນວັດຖຸດິບໃນການຜະລິດສິນຄ້າສໍາເລັດຮູບ ເພື່ອໄດ້ຮັບສິດທິພິເສດທາງດ້ານພາສີ ໃຫ້ຖືວ່າສິນຄ້ານັ້ນມີແຫຼ່ງກໍາເນີດໃນປະເທດທີ່ດໍາເນີນການຜະລິດ ແລະ ແປຮູບສິນຄ້າດັ່ງກ່າວເປັນສິນຄ້າສໍາເລັດຮູບ.

2. ຖ້າວ່າສ່ວນປັນຈຸພາຍໃນທ້ອງຖິ່ນ LVC ຂອງວັດຖຸດິບຫາກໜ້ອຍກ່ວາ 40%, ການຄຳນວນສ່ວນປັນຈຸພາຍໃນ LVC ແມ່ນໃຫ້ຄິດໄລ່ເປັນສັດສ່ວນມູນຄ່າໂດຍຕົງຕາມ ສັດ ສ່ວນປັນຈຸ ພາຍໃນປະເທດຕາມຄວາມເປັນຈິງ ຫາກວ່າສັດສ່ວນນັ້ນລວມກັນແລ້ວເທົ່າກັບ ຫຼື ຫຼາຍກ່ວາ 20% . ບົດແນະນຳການປະຕິບັດແມ່ນລະບຸໄວ້ໃນ ເອກະສານຊ້ອນທ້າຍ 2 .

## ມາດຕາ 7

### ສິນຄ້າທີ່ຜ່ານການດຳເນີນການ ແລະ ຂະບວນການຜະລິດພຽງໜ້ອຍດຽວ

1. ຜະລິດຕະພັນທີ່ຜ່ານການປຸງແຕ່ງ ຫຼື ການຜະລິດ ໃນຂໍ້ໃດຂໍ້ໜຶ່ງ ຫຼື ດຳເນີນການຮ່ວມກັນໂດຍມີຈຸດປະສົງຕາມເນື້ອໃນດັ່ງລຸ່ມນີ້ ໃຫ້ຖືວ່າມີຂະບວນຜະລິດທີ່ໜ້ອຍດຽວ ແລະ ບໍ່ສາມາດນຳສິນຄ້ານັ້ນມາພິຈາລະນາວ່າ ມີແຫຼ່ງກຳເນີດ ສິນຄ້າ ໃນປະເທດຄູ່ສັນຍາໜຶ່ງ:

(ກ) ການເກັບຮັກສາສິນຄ້າເພື່ອໃຫ້ຢູ່ໃນສະພາບທີ່ດີ ເພື່ອຈຸດປະສົງຂອງການຂົນສົ່ງ ຫຼື ການຈັດເກັບ;

(ຂ) ການອຳນວຍຄວາມສະດວກໃນການຂົນສົ່ງທາງເຮືອ ແລະ ການຂົນສົ່ງ;

(ຄ) ການຫຸ້ມຫໍ່ສິນຄ້າ ຫຼື ການນຳສະເໜີສິນຄ້າໃນການຂາຍ.

2. ສິນຄ້າທີ່ຂົນສົ່ງອອກຈາກປະເທດ ຄູ່ສັນຍາໜຶ່ງ ຈະຍັງຮັກສາສະຖານະພາບຂອງ ແຫຼ່ງກຳເນີດເດີມ ເມື່ອສົ່ງອອກໄປປະເທດ ຄູ່ສັນຍາອື່ນ ຫາກ ບໍ່ມີການດຳເນີນງານທີ່ເກີນໄປຈາກທີ່ລະບຸໄວ້ໃນຂໍ້ ທີ 1 ໃນມາດຕານີ້.

## ມາດຕາ 8

### ການຂົນສົ່ງໂດຍກົງ

1. ສິດທິພິເສດທາງດ້ານພາສີຈະໃຫ້ກັບສິນຄ້າ ທີ່ມີເງື່ອນໄຂຕາມຂໍ້ກຳນົດໃນເອກະສານຊ້ອນທ້າຍນີ້ ແລະໄດ້ຂົນສົ່ງໂດຍກົງ ລະຫວ່າງຂົງເຂດປະເທດຄູ່ສັນຍາສົ່ງອອກ ແລະ ຂົງເຂດປະເທດຄູ່ສັນຍານຳເຂົ້າ.

2. ສິນຄ້າທີ່ສົ່ງໃນລັກສະນະດັ່ງຕໍ່ໄປນີ້ ໃຫ້ຖືເປັນການຂົນສົ່ງໂດຍຕົງຈາກປະເທດສົ່ງອອກໄປປະເທດນຳເຂົ້າ:

(ກ) ສິນຄ້າໄດ້ຖືກສົ່ງໂດຍຕົງຈາກປະເທດສົ່ງອອກ ໄປປະເທດຜູ້ນຳເຂົ້າ; ຫຼື

(ຂ) ຫາກວ່າສິນຄ້ານັ້ນໄດ້ຖືກຂົນສົ່ງໂດຍຜ່ານປະເທດອື່ນທີ່ບໍ່ແມ່ນຄູ່ສັນຍາ, ໂດຍມີເງື່ອນໄຂວ່າ:

- ການຂົນສົ່ງນັ້ນເນື່ອງຈາກເຫດຜົນທາງພູມີສາດ ຫຼື ໂດຍການພິຈາລະນາທີ່ກ່ຽວກັບຂໍ້ກຳນົດຂອງການຂົນສົ່ງໂດຍສະເພາະ;

- ສິນຄ້ານັ້ນບໍ່ໄດ້ນຳເຂົ້າໄປສູ່ການຊື້ຂາຍ ຫຼື ໃຊ້ບໍລິໂພກໃນປະເທດນັ້ນ; ແລະ
- ສິນຄ້ານັ້ນບໍ່ໄດ້ຜ່ານຂະບວນການອື່ນໃນປະເທດນັ້ນ ນອກຈາກການຂົນຍ້າຍສິນຄ້າຂຶ້ນ ແລະ ລົງ ຫຼື ການກະທຳອື່ນໃດນອກຈາກທີ່ຈຳເປັນແກ່ການຮັກສາສິນຄ້າໃຫ້ຢູ່ໃນສະພາບທີ່ດີ.

## ມາດຕາ 9

### ມູນຄ່າຂັ້ນຕໍ່າ (De Minimis )

1. ສິນຄ້າທີ່ບໍ່ໄດ້ຜ່ານການປ່ຽນສະພາບດ້ານລະຫັດພາສີ ຈະຖືວ່າໄດ້ແຫຼ່ງກຳເນີດ ຫາກວ່າມູນຄ່າຂອງວັດຖຸດິບທີ່ບໍ່ໄດ້ແຫຼ່ງກຳເນີດທີ່ໃຊ້ໃນການຜະລິດ ທີ່ບໍ່ໄດ້ເຮັດໃຫ້ສິນຄ້າປ່ຽນລະຫັດພາສີມີມູນຄ່າໜ້ອຍກ່ວາ 10% ຂອງມູນຄ່າ FOB ຂອງສິນຄ້ານັ້ນ ແລະ ສິນຄ້ານັ້ນຕົງກັບເງື່ອນໄຂແຫຼ່ງກຳເນີດສິນຄ້າພາຍໃຕ້ຂໍ້ຕົກລົງຂອງ ເອກະສານຊ້ອນທ້າຍນີ້.
2. ມູນຄ່າຂອງວັດຖຸດິບທີ່ບໍ່ໄດ້ແຫຼ່ງກຳເນີດໃນຫົວຂໍ້ 1 ຂອງມາດຕານີ້ ຈະຕ້ອງຮວມເປັນມູນຄ່າວັດຖຸດິບທີ່ບໍ່ໄດ້ແຫຼ່ງກຳເນີດ ໃນການຄິດໄລ່ສັດສ່ວນມູນຄ່າ LVC ຂອງສິນຄ້າ.

## ມາດຕາ 10

### ການປະຕິບັດຕໍ່ການຫໍ່ສິນຄ້າ ແລະ ວັດຖຸດິບຫຸ້ມຫໍ່ສິນຄ້າ

1. ການບັນຈຸ ແລະ ການຫໍ່ຫຸ້ມສິນຄ້າໃນການຂາຍຍ່ອຍ:

   (ກ) ຫາກວ່າຫຼັກເກນຂອງການໄດ້ແຫຼ່ງກຳເນີດສິນຄ້າແມ່ນ LVC, ມູນຄ່າຂອງການບັນຈຸ ແລະ ຫຸ້ມຫໍ່ສິນຄ້າສຳຫຼັບການຂາຍຍ່ອຍ ຈະນຳເຂົ້າຮ່ວມໃນການພິຈາລະນາແຫຼ່ງກຳເນີດສິນຄ້າວ່າເປັນອັນໜຶ່ງອັນດຽວກັບສິນຄ້ານັ້ນ.

   (ຂ) ໃນກໍລະນີທີ່ ຂໍ້ 1(ກ) ໃນມາດຕານີ້ບໍ່ສາມາດໃຊ້ໄດ້ ເມື່ອມີການບັນຈຸ ແລະ ຫຸ້ມຫໍ່ສິນຄ້າສຳຫຼັບການຂາຍຍ່ອຍໄປກັບຜະລິດຕະພັນແລ້ວ ຈະບໍ່ສາມາດນຳເອົາວັດສະດຸໃນການຫຸ້ມຫໍ່ນັ້ນມາພິຈາລະນາວ່າວັດຖຸດິບທີ່ບໍ່ໄດ້ແຫຼ່ງກຳເນີດສິນ ຄ້າທັງໝົດທີ່ໃຊ້ໃນການຫຸ້ມຫໍ່ນັ້ນສາມາດປ່ຽນລະຫັດຕາພາສີໄດ້.

2. ຫີບຫໍ່ ແລະ ວັດຖຸດິບໃນການຫຸ້ມຫໍ່ ທີ່ໃຊ້ພຽງແຕ່ໃນການຂົນສົ່ງສິນຄ້າຈະບໍ່ສາມາດນຳມາພິຈາລະນາແຫຼ່ງກຳເນີດສິນຄ້ານັ້ນໄດ້.

## ມາດຕາ 11

### ອຸປະກອນປະກອບ, ອາໄຫຼ່ ແລະ ເຄື່ອງມື

1. ຫາກວ່າສິນຄ້າໄດ້ແຫຼ່ງກຳເນີດໂດຍໃຊ້ກົດ CTC ຫຼື ວ່າມີການຜະລິດ ແລະ ວິທີການ

ຜະລິດທີ່ສະເພາະເຈາະຈົງ, ແຫຼ່ງກຳເນີດຂອງອຸບປະກອນປະກອບ, ອາໄຫຼ່, ເຄື່ອງມື ແລະ ຄູ່ມືກ່ຽວກັບການສອນການໃຊ້ງານ ຫຼື ອຸບປະກອນທີ່ເປັນຂໍ້ມູນຕ່າງໆ ທີ່ນຳເຂົ້າມາກັບສິນຄ້າ ຈະບໍ່ນຳມາໃຊ້ໃນການພິຈາລະນາໃນການກຳນົດແຫຼ່ງກຳເນີດຂອງສິນຄ້ານັ້ນ ຫາກວ່າອຸປະກອນປະກອບດັ່ງກ່າວຕົງກັບເງື່ອນໄຂລຸ່ມນີ້:

(ກ) ອຸປະກອນປະກອບ, ອາໄຫຼ່, ເຄື່ອງມື ແລະ ຄູ່ມືກ່ຽວກັບການສອນການໃຊ້ງານ ຫຼື ອຸປະກອນທີ່ເປັນຂໍ້ມູນຕ່າງໆ ບໍ່ໄດ້ມີໃບເກັບເງິນຕ່າງຫາກຈາກສິນຄ້າ; ແລະ

(ຂ) ຈຳນວນປະລິມານຂອງ ອຸປະກອນປະກອບ, ອາໄຫຼ່, ເຄື່ອງມື ແລະ ຄູ່ມືກ່ຽວກັບການສອນການໃຊ້ງານ ຫຼື ອຸປະກອນທີ່ເປັນຂໍ້ມູນຕ່າງໆ ແມ່ນຢູ່ໃນຈຳນວນມາດຕະຖານສຳຫຼັບສິນຄ້າແລ້ວ.

2. ຫາກວ່າສິນຄ້າໄດ້ແຫຼ່ງກຳເນີດໂດຍໃຊ້ກົດ LVC ມູນຄ່າຂອງອຸປະກອນປະກອບ, ອາໄຫຼ່, ເຄື່ອງມື ແລະ ຄູ່ມືກ່ຽວກັບການສອນການໃຊ້ງານ ຫຼື ອຸປະກອນທີ່ເປັນຂໍ້ມູນຕ່າງໆ ທີ່ນຳເຂົ້າກັບສິນຄ້າ ຈະຕ້ອງໄດ້ນຳມາໃຊ້ໃນການພິຈາລະນາໃນການກຳນົດແຫຼ່ງກຳເນີດຂອງສິນຄ້ານັ້ນ.

## ມາດຕາ 12
### ອົງປະກອບທົ່ວໄປ

ໃນການພິຈາລະນາວ່າສິນຄ້າໃດໜຶ່ງມີແຫຼ່ງກຳເນີດ ຫຼືບໍ່, ບໍ່ມີຄວາມຈຳເປັນທີ່ຈະຕ້ອງພິຈາລະນາແຫຼ່ງກຳເນີດຂອງອົງປະກອບທີ່ອາດຖືກນຳມາໃຊ້ໃນຂະບວນການຜະລິດ ແລະ ບໍ່ເປັນສ່ວນໜຶ່ງຂອງສິນຄ້າ ດັ່ງລາຍການຕໍ່ໄປນີ້:

1) ເຊື້ອໄຟ ແລະ ພະລັງງານ;

2) ເຄື່ອງມື, ແມ່ພິມ ແລະ ແບບພິມ;

3) ສ່ວນປະກອບສຳຮອງ ແລະ ວັດຖຸດິບໃຊ້ໃນການບົວລະບັດຮັກສາເຄື່ອງມືອຸບປະກອນ ແລະ ສະຖານທີ່;

4) ນ້ຳມັນເຄື່ອງ, ນ້ຳມັນຈາລະບີ, ວັດຖຸດິບປະກອບ ແລະ ວັດຖຸດິບອື່ນໆທີ່ໃຊ້ໃນການຜະລິດ ຫຼື ໃຊ້ກັບເຄື່ອງມື ແລະ ສະຖານທີ່;

5) ຖົງມື, ແວ່ນຕາ, ເກີບ, ເຄື່ອງນຸ່ງ, ອຸບປະກອນ ແລະ ເຄື່ອງມືເພື່ອຄວາມປອດໄພ;

6) ອຸປະກອນ ແລະ ເຄື່ອງມືສະເພາະ ທີ່ໃຊ້ເພື່ອທົດສອບ ແລະ ກວດສອບ ສິນຄ້າ;

7) ສານເຄມີທີ່ເລັ່ງໃຫ້ເກີດການປຸ່ງແປງ ແລະ ສານລະລາຍ; ແລະ

8) ສິນຄ້າອື່ນໆທີ່ບໍ່ໄດ້ຮວມເປັນສ່ວນດຽວກັບສິນຄ້າ ແຕ່ນຳໄປໃຊ້ເຂົ້າໃນການຜະລິດສິນຄ້າ ທີ່ສາມາດສະແດງໃຫ້ເຫັນວ່າເປັນສ່ວນໜຶ່ງຂອງຂະບວນການຜະລິດ ນັ້ນ.

## ມາດຕາ 13

### ວັດຖຸທີ່ຄືກັນ ແລະ ສາມາດໃຊ້ແທນກັນໄດ້

1. ໃນການກຳນົດວ່າວັດຖຸທີ່ຄືກັນ ແລະ ສາມາດໃຊ້ແທນກັນໄດ້ ມີແຫຼ່ງກຳເນີດສິນຄ້າ ຈະພິຈະລານາວັດຖຸດິບດັ່ງກ່າວ ໂດຍການແຍກແຕ່ລະວັດຖຸດິບອອກຈາກກັນ ຫຼື ໂດຍການໃຊ້ຫຼັກການທາງບັນຊີທົ່ວໄປທີ່ໃຊ້ໃນການຄວບຄຸມ ແລະ ບໍລິຫານຈັດການບັນຊີສິນຄ້າໃນສາງ ທີ່ນຳໃຊ້ຢູ່ໃນປະເທດຄູ່ສັນຍາສ່ວນຜູ້ສົ່ງອອກ.
2. ເມື່ອຕັດສິນໃຈເລືອກໃຊ້ວິທີການບໍລິຫານຈັດການບັນຊີສິນຄ້າ ແລ້ວ ຈະຕ້ອງໃຊ້ວິທີການນັ້ນຕະຫຼອດປີເພື່ອໃຊ້ໃນການຈັດເກັບພາສີ.

## ມາດຕາ 14

### ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ

ການສະເໜີຂໍໃຫ້ສິນຄ້າໄດ້ຮັບສິດທິພິເສດທາງດ້ານພາສີ ຕ້ອງຮັບຮອງດ້ວຍໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (Form S), ດັ່ງທີ່ໄດ້ລະບຸໄວ້ໃນ ເອກະສານຊ້ອນທ້າຍທີ 5 ທີ່ອອກໂດຍໜ່ວຍງານເຈົ້າໜ້າທີ່ລັດທີ່ໄດ້ຮັບມອບໝາຍໂດຍປະເທດຜູ້ສົ່ງອອກ ໂດຍໄດ້ແຈ້ງໃຫ້ປະເທດນຳເຂົ້າຮັບຮູ້ຕາມຂໍ້ຕົກລົງລະບຽບຂັ້ນຕອນໃນການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ, ດັ່ງທີ່ໄດ້ລະບຸໄວ້ໃນ ເອກະສານຊ້ອນທ້າຍທີ 4./.

## ເອກະສານຊ້ອນທ້າຍ 2

ເພື່ອປະຕິບັດຂໍ້ 2, ມາດຕາ 6, ວ່າດ້ວຍລະບຽບແຫຼ່ງກຳເນີດ ລາວ - ຫວຽດນາມ (ເອກະສານຊ້ອນທ້າຍ 1):

1. ສິນຄ້າທີ່ໄດ້ສ່ວນປະສົມບາງສ່ວນ ຖ້າຢ່າງໜ້ອຍ 20% ສ່ວນບັນຈຸ ລາວ-ຫວຽດ (LVC) ຂອງສິນຄ້າທີ່ມີແຫຼ່ງກຳເນີດມາຈາກປະເທດສະມະຊິກເຊິ່ງຜ່ານຂະບວນການຜະລິດ ຫຼື ຂັ້ນຕອນການຜະລິດນັ້ນ;
2. ສ່ວນບັນຈຸລາວ-ຫວຽດຂອງສິນຄ້າທີ່ກຳນົດໃນຂໍ້ 1 ຂອງເອກະສານຊ້ອນທ້າຍສະບັບນີ້ຈະໄດ້ຄິດໄລ່ຕາມສູດທີ່ກຳນົດໃນມາດຕາ 5 ຂອງລະບຽບແຫຼ່ງກຳເນີດ ລາວ-ຫວຽດນາມ;
3. ສິນຄ້າສົ່ງອອກທີ່ຕອບສະໜອງບັນດາຂໍ້ກຳນົດປະສົມບາງສ່ວນບໍ່ໄດ້ຮັບບູລິມະສິດອັດຕາພາສີ ລາວ-ຫວຽດນາມຂອງປະເທດສະມະຊິກນຳເຂົ້າ;
4. ສິນຄ້າສົ່ງອອກທີ່ຕອບສະໜອງບັນດາຂໍ້ກຳນົດໃນຂໍ້ຕົກລົງສະບັບນີ້ແມ່ນຕ້ອງໃບ C.O ຟອມ S ທີ່ເໝາະສົມ, ມີກາໝາຍ Tick ຫ້ອງ " Partial Cumulation";
5. ບັນດາຂໍ້ກຳນົດທີ່ກ່ຽວຂໍ້ຂອງເອກະສານຊ້ອນທ້າຍ 2, ລວມທັງມາດຕາ 17 ແລະ ມາດຕາ 18, ຈະຕອບສະໜອງໃຫ້ກັບ C.O ຟອມ S ໄດ້ອອກໃຫ້ຕ້ອງນອນຢູ່ໃນເປົ້າໝາຍສ່ວນປະສົມບາງສ່ວນ.

**<u>ສາລະບານເລກ 3:</u>** ບັນຊີ ແລະ ຈຳນວນສິນຄ້າຂອງລາວ ທີ່ໄດ້ກຳນົດດັດແກ້ຊື່ວຄາວ ກ່ຽວກັບສິນຄ້າທີ່ມີແຫຼ່ງກຳເນີດຕາມອັດຕາສ່ວນບັນຈຸພາຍໃນລາວ 30 % (LVC 30). ກຳນົດເວລາຈັດຕັ້ງປະຕິບັດແມ່ນຮອດວັນທີ 31/12/2010

| ລ/ດ | ລາຍການສິນຄ້າ | ເລກລະຫັດພາສີ | ຫົວໜ່ວຍ | ຈຳນວນ |
|---|---|---|---|---|
| 1 | 87.14.19.60 | ຂາເກຍລົດຈັກ | USD | ສຳລັບສິນຄ້າທີ່ມີເລກລຳດັບແຕ່ 1-6 ມີມູນຄ່າລວມ 600.000 USD (ຕາມລາຄາ Ex Factory) |
| 2 | 87.14.19.60 | ຂາຄຳຄູ່ | USD | |
| 3 | 87.14.19.60 | ຂາຄຳດ່ຽວ | USD | |
| 4 | 87.14.19.60 | ຂາຢຽບຜູ້ຂັບ | USD | |
| 5 | 87.14.19.60 | ຂາຢຽບຜູ້ຊ້ອນ | USD | |
| 6 | 87.14.19.60 | ຂາຢຽບເບກ | USD | |
| 7 | 6301.90.10 | ຜ້າຫົ່ມ | ຜືນ | 130.000 |
| 8 | 8414.51 | ພັດລົມໄຟຟ້າທຸກປະເພດ | ໜ່ວຍ | 150.000 |
| 9 | 8509.40.00 | ເຄື່ອງປັ່ນໝາກໄມ້ | ອັນ | 80.000 |
| 10 | 8516.10.10 | ກະຕິກຕົ້ມນ້ຳຮ້ອນ | ອັນ | 20.000 |
| 11 | 8516.31.00 | ເຄື່ອງເປົ່າຜົມ | ອັນ | 40.000 |
| 12 | 8516.40 | ເຕົາລີດໄຟຟ້າ | ອັນ | 40.000 |
| 13 | 8516.60.10 | ໝໍ້ຫຸງເຂົ້າໄຟຟ້າ | ໜ່ວຍ | 400.000 |
| 14 | 8516.60.20 | ເຕົາອົບ-ປີ້ງ | ໜ່ວຍ | 40.000 |
| 15 | 8516.60.90 | ໝໍ້ສຸກີ້ໄຟຟ້າ | ໜ່ວຍ | 50.000 |
| 16 | 8516.79.10 | ການຳໄຟຟ້າ | ອັນ | 40.000 |
| 17 | 8535.90.90 | ເຄື່ອງຈັບຍຸງ | ອັນ | 10.000 |

## ເອກະສານຊ້ອນທ້າຍ 4
## ລະບຽບການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ
## ພາຍໃຕ້ສັນຍາ ລາວ-ຫວຽດ ວ່າດ້ວຍແຫຼ່ງກຳເນີດສິນຄ້າ

ເພື່ອຈຸດປະສົງຂອງການປະຕິບັດງານວ່າດ້ວຍແຫຼ່ງກຳເນີດສິນຄ້າທີ່ກຳນົດໄວ້ໃນເອກະສານ ຊ້ອນທ້າຍ 1 , ລະບຽບຂັ້ນຕອນ ປະຕິບັດ ການອອກ ແລະການກວດສອບ ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (Form S) ແລະ ລວມທັງກົດລະບຽບ ທີ່ກ່ຽວຂ້ອງຕ່າງໆ ດັ່ງລຸ່ມນີ້ ຈະຕ້ອງຖືກປະຕິບັດຕາມ:

### ມາດຕາ 1
### ຄຳນິຍາມ

ເພື່ອຈຸດປະສົງຂອງເອກະສານຊ້ອນທ້າຍນີ້:

1. " **ໜ່ວຍງານທີ່ມີອຳນາດທາງດ້ານພາສີ** " ແມ່ນໜ່ວຍງານທີ່ມີອຳນາດທາງດ້ານພາສີ ໝາຍເຖິງໜ່ວຍງານທີ່ມີ ຄວາມສາມາດໃນການ ຮັບຜິດຊອບທາງດ້ານກົດໝາຍຂອງປະເທດຄູ່ສັນຍາ ເພື່ອດຳ ເນີນການທາງດ້ານກົດ ໝາຍ ແລະລະບຽບການທາງດ້ານພາສີ;
2. " **ຜູ້ສົ່ງອອກ** " ແມ່ນບຸກຄົນ ຫຼື ນິຕິບຸກຄົນ ທີ່ອາໃສຢູ່ໃນຂົງ ເຂດຂອງປະເທດຄູ່ສັນຍາບ່ອນທີ່ມີການສົ່ງອອກສິນຄ້າໂດຍບຸກຄົນນັ້ນ;
3. " **ຜູ້ນຳເຂົ້າ** " ແມ່ນບຸກຄົນ ຫຼື ນິຕິບຸກຄົນ ທີ່ອາໃສຢູ່ໃນຂົງເຂດ ຂອງ ປະເທດຄູ່ສັນຍາ ບ່ອນທີ່ສິນຄ້າມີການນຳເຂົ້າໂດຍບຸກຄົນນັ້ນ;
3. " **ໜ່ວຍງານຜູ້ມີອຳນາດອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ** " ແມ່ນໜ່ວຍງານທີ່ຖືກແຕ່ງຕັ້ງໂດຍລັດຖະບານຂອງປະເທດຜູ້ສົ່ງອອກມີສິດອອກອະນຸຍາດໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (Form S) ແລະ ໄດ້ແຈ້ງໃຫ້ປະເທດຄູ່ສັນຍາຮັບຮູ້ ເນື້ອໃນ ຂອງເອກະສານຊ້ອນທ້າຍນີ້; ແລະ
4. " **ຜູ້ຜະລິດ** " ແມ່ນບຸກຄົນ ຫຼື ນິຕິບຸກຄົນ ທີ່ກະທຳການຜະລິດສິນຄ້າ ໃນປະເທດຄູ່ສັນຍາໃດໜຶ່ງທີ່ໄດ້ກຳນົດໃນມາດຕາ 1, ເອກະສານຊ້ອນທ້າຍ 1.

### ມາດຕາ 2
### ແບບຢ່າງລາຍເຊັນ ແລະ ກາຈ້ຳ ຂອງຜູ້ມີອຳນາດໃນການອອກໃບຢັ້ງຢືນ

1. ແຕ່ລະປະເທດຄູ່ສັນຍາ ຕ້ອງໄດ້ແຈ້ງ ບັນຊີລາຍຊື່, ທີ່ຢູ່, ແບບຢ່າງລາຍເຊັນ ແລະ ແບບຢ່າງ ກາຈ້ຳທາງການຂອງຜູ້ມີສິດອອກໃບຢັ້ງຢືນແຫຼ່ງກຳເນີດ ໃຫ້ອີກຝ່າຍ ໃນ ຮູບແບບ

ເປັນເຈ້ຍ ແລະ ເປັນສອບຄອບປີ້. ໃນກໍລະນີທີ່ມີການປ່ຽນແປງ ຕ່າງໆຕ້ອງ ແຈ້ງໃຫ້ ອີກຝ່າຍໜຶ່ງ ຮັບຮູ້ໂດຍໄວ ໃນລັກສະນະດຽວກັນ.

2. ແບບຢ່າງລາຍເຊັນ ແລະ ກາຈ້ຳທາງການຂອງຝ່າຍຜູ້ມີອຳນາດອອກໃບຢັ້ງຢືນແຫຼ່ງກຳເນີດຄວນຕ້ອງມີການອັບເດດທຸກໆ 2 ປີ. ບໍ່ວ່າໃບຢັ້ງຢືນແຫຼ່ງກຳເນີດ (Form S) ໃດໆທີ່ອອກໂດຍຜູ້ມີອຳນາດທີ່ບໍ່ມີຊື່ໃນລາຍຊື່ໃນວັກທີ 1 ທີ່ກ່າວມາຂ້າງເທິງ ປະເທດຜູ້ນຳເຂົ້າຈະຖືວ່າເອກະສານບໍ່ຖືກຕ້ອງ.

## ມາດຕາ 3
## ເອກະສານຢັ້ງຢືນ

ເພື່ອຈຸດປະສົງທີ່ຈະສາມາດພິຈາລະນາແຫຼ່ງກຳເນີດສິນຄ້າ, ຜູ້ອອກໃບຢັ້ງຢືນມີຄວາມສາມາດຂໍເອກະສານຫຼັກຖານຢັ້ງຢືນເພີ່ມຕື່ມ ຫຼື ກວດກາຕາມຄວາມເໝາະສົມເພື່ອໃຫ້ຕົງກັບກົດໝາຍ ແລະ ຂໍ້ກຳນົດກົດລະບຽບພາຍໃນຂອງປະເທດຄູ່ສັນຍາ.

## ລະບຽບ 4
## ການກວດສອບແຫຼ່ງກຳເນີດສິນຄ້າກ່ອນສົ່ງອອກ

1. ຜູ້ຜະລິດ, ຜູ້ສົ່ງອອກສິນຄ້າ ຫຼື ຕົວແທນຜູ້ຕາງໜ້າສົ່ງອອກສິນຄ້າ ສາມາດຍື່ນໃບສະເໜີຂໍຕໍ່ໜ່ວຍງານຜູ້ມີອຳນາດອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າສຳຫຼັບການກວດສອບແຫຼ່ງ ກຳເນີດສິນຄ້າກ່ອນສົ່ງອອກ ຕາມກົດໝາຍ ແລະ ກົດລະບຽບ ພາຍໃນຂອງປະເທດຄູ່ສັນຍາ ຜົນຂອງການກວດສອບນີ້ສາມາດໃຊ້ເປັນຫຼັກຖານໃນການພິຈາລະນາແຫຼ່ງກຳເນີດ ສິນຄ້າທີ່ຈະສົ່ງອອກດັ່ງກ່າວ. ໂດຍມີການກວດກາຜົນກວດສອບດັ່ງກ່າວເປັນໄລຍະຕາມຄວາມເໝາະສົມ ການກວດສອບກ່ອນສົ່ງອອກນີ້ ຈະບໍ່ຈຳເປັນໃຊ້ກັບສິນຄ້າທີ່ຕາມທຳມະຊາດສາມາດກຳນົດແຫຼ່ງກຳເນີດໄດ້ງ່າຍດາຍ.

2. ໃນກໍລະນີທີ່ໃຊ້ວັດຖຸດິບທີ່ຫາໄດ້ຕາມທ້ອງຖິ່ນ, ໃຫ້ຜູ້ຜະລິດຜູ້ສຸດທ້າຍທີ່ຈະສົ່ງສິນຄ້າອອກພາຍໃຕ້ຂໍ້ຕົກລົງໃນ ເອກະສານຊ້ອນທ້າຍນີ້ ເປັນຜູ້ຢັ້ງຢືນໃນເວລາຂໍໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຟອມ S.

## ມາດຕາ 5
## ການຍື່ນສະເໜີຂໍໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ

ຜູ້ສົ່ງອອກ ຫຼື ຕົວແທນຜູ້ໄດ້ຮັບມອບສິດ ສາມາດສະເໜີຂໍໃບຢັ້ງຢືນແຫຼ່ງກຳເນີດ ສິນຄ້າເປັນລາຍລັກອັກສອນໃນເວລາທີ່ມີການດຳເນີນການສົ່ງອອກ ຊຶ່ງສິນຄ້າທີ່ຈະໄດ້ຮັບສິດທິພິ

ເສດທາງດ້ານພາສີນັ້ນຕ້ອງມີເອກະສານທີ່ຜູ້ສົ່ງອອກຕ້ອງຕິດຄັດເອກະສານຫຼັກຖານຢັ້ງຢືນວ່າ ສິນຄ້າມີຄຸນະສົມບັດທີ່ເໝາະສົມຕໍ່ການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ.

## ມາດຕາ 6
## ການກວດສອບໃບສະເໜີຂໍແຫຼ່ງກຳເນີດສິນຄ້າກ່ອນສົ່ງອອກສິນຄ້າ

ໜ່ວຍງານລັດທີ່ໄດ້ຮັບມອບໝາຍໃຫ້ອອກໜັງສືຢັ້ງຢືນແຫຼ່ງກຳເນີດສິນຄ້າ ຈະຕ້ອງກວດສອບໃບສະເໜີຂໍໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ(Form S) ທຸກສະບັບຢ່າງສຸດຄວາມສາມາດ ຕາມກົດໝາຍ ແລະ ຕາມກົດລະບຽບພາຍໃນປະເທດຄູ່ສັນຍາ ເພື່ອໃຫ້ແນ່ໃຈວ່າ:

1. ໃບສະເໜີຂໍໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ແລະ ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ(Form S)ໄດ້ມີເນື້ອໃນ ຖືກຕ້ອງຄົບຖ້ວນ ແລະ ລົງນາມໂດຍຜູ້ມີສິດລົງນາມ;
2. ແຫຼ່ງກຳເນີດຂອງສິນຄ້າຕົງກັບຂໍ້ກຳນົດວ່າດ້ວຍແຫຼ່ງກຳເນີດສິນຄ້າລະບຸໄວ້ໃນ ເອກະສານ ຊ້ອນທ້າຍ 1;
3. ການແຈ້ງຂໍ້ມູນ ຕ່າງໆໃນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ(Form S) ສອດຄ່ອງກັບເອກະສານປະກອບທີ່ ໄດ້ຍື່ນເພື່ອໃຊ້ເປັນຫຼັກຖານ;
4. ລາຍການສິນຄ້າ, ປະລິມານ ແລະ ນ້ຳໜັກຂອງສິນຄ້າ ເຄື່ອງໝາຍ ແລະ ເລກໝາຍຂອງຫີບຫໍ່, ຈຳນວນ ແລະ ຊະນິດ ຂອງຫີບຫໍ່ ທີ່ໄດ້ສະເໜີໄວ້ຕົງກັບສິນຄ້າທີ່ສົ່ງອອກ;
5. ຫຼາຍລາຍການສິນຄ້າສາມາດລະບຸໄວ້ໃນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ, ວ່າດ້ວຍເງື່ອນໄຂແຕ່ລະສິນຄ້າຕອບສະໜອງບັນດາກົດລະບຽບກ່ຽວກັບແຫຼ່ງກຳເນີດຂອງແຕ່ລະສິນຄ້ານັ້ນ.

## ມາດຕາ 7
## ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (Form S)

1. ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ(Form S) ຕ້ອງໃຊ້ເຈ້ຍຂາວ ຂະໜາດ ISO A4 ຕາມຕົວຢ່າງໃນ ເອກະສານຊ້ອນທ້າຍ 5 ແລະ ຕ້ອງຈັດພິມເປັນພາສາອັງກິດ.
2. ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ(Form S) ປະກອບມີຕົ້ນສະບັບ 1 ສະບັບ ແລະ ສະບັບສຳເນົາ 2 ສະບັບ (ສຳເນົາທີ່ໜຶ່ງ ແລະ ສຳເນົາທີ່ສອງ).
3. ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ(Form S) ແຕ່ລະສະບັບຈະມີເລກທີອ້າງອີງສະເພາະທີ່ແຕກຕ່າງກັນ ໂດຍການຈຳແນກຈາກສະຖານທີ່ ຫຼື ສຳນັກງານທີ່ອອກເລກທີແຫຼ່ງກຳເນີດສິນຄ້າ.
4. ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ(Form S) ແຕ່ລະສະບັບຈະມີລາຍເຊັນ ແລະ ກາຈ້ຳດວັງມີ ຂອງຜູ້ມີອຳນາດອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ.
5. ຜູ້ສົ່ງອອກ ຈະຕ້ອງເອົາໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຕົ້ນສະບັບໄປໃຫ້ຜູ້ນຳເຂົ້າເພື່ອ

ຍື່ນຕໍ່ພະນັກງານພາສີທີ່ທ່າເຮືອ ຫຼື ສະຖານທີ່ນຳເຂົ້າ, ສຳເນົາສະບັບທີ່ໜຶ່ງໃຫ້ໜ່ວຍງານຜູ້ມີອຳນາດອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າໃນປະເທດຜູ້ສົ່ງອອກເກັບຮັກສາໄວ້, ສ່ວນສຳເນົາທີສອງໃຫ້ຜູ້ສົ່ງອອກເກັບຮັກສາໄວ້.

## ມາດຕາ 8
## ການແຈ້ງກ່ຽວກັບເງື່ອນໄຂແຫຼ່ງກຳເນີດສິນຄ້າ

ເພື່ອປະຕິບັດຕາມມາດຕາ 2 ຂອງລະບຽບແຫຼ່ງກຳເນີດສິນຄ້າ,ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ(Form S) ທີ່ອອກໂດຍປະເທດຜູ້ສົ່ງອອກສຸດທ້າຍ ຈະຕ້ອງລະບຸເງື່ອນໄຂທີ່ນຳໃຊ້ໃນການກຳນົດແຫຼ່ງກຳເນີດສິນຄ້າໃນຫ້ອງທີ 8.

## ມາດຕາ 9
## ການແກ້ໄຂຄວາມບໍ່ຖືກຕ້ອງໃນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ

ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ(Form S)ຈະບໍ່ໃຫ້ມີຮອຍລຶບ ຫຼື ຮອຍພິມທັບໄດ້, ການແກ້ໄຂຕ່າງໆຕ້ອງເຮັດໂດຍ:

1. ການພິມລຶບຂໍ້ຄວາມທີ່ບໍ່ຖືກຕ້ອງ ຫຼື ພິມຂໍ້ຄວາມທີ່ຖືກຕ້ອງເພີ່ມຕື່ມໃໝ່ ຈະຕ້ອງມີການໄດ້ຮັບການອະນຸມັດຈາກຜູ້ມີອຳນາດລົງນາມໃນໃບຢັ້ງຢືນ ແລະ ຕ້ອງໄດ້ຮັບການຮັບຮອງໂດຍໜ່ວຍງານຜູ້ມີອຳນາດອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຊ່ອງວ່າງທີ່ບໍ່ໄດ້ນຳໃຊ້ໃຫ້ຂີດຂ້າເພື່ອບໍ່ໃຫ້ສາມາດເພີ່ມຕື່ມຂໍ້ຄວາມໃສ່ໄດ້; ຫຼື
2. ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າໃໝ່ ເພື່ອແທນໃບເກົ່າທີ່ບໍ່ຖືກຕ້ອງ.

## ມາດຕາ 10
## ການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ

1. ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ(Form S) ຈະອອກໃຫ້ໂດຍໜ່ວຍງານທີ່ມີອຳນາດອອກໃບຢັ້ງຢືນ ຂອງປະເທດຜູ້ສົ່ງອອກໃນເວລາທີ່ສົ່ງອອກ ຫຼື ໃນທັນທີຫຼັງຈາກນັ້ນຕາມບັນດາກົດລະບຽບແຫຼ່ງກຳເນີດໃນເອກະສານຊ້ອນທ້າຍ 1 ເມື່ອສິນຄ້າທີ່ຈະສົ່ງອອກໄດ້ຮັບການພິຈາລະນາແລ້ວວ່າໄດ້ແຫຼ່ງກຳເນີດໃນປະເທດຄູ່ສັນຍາຕາມກົດລະບຽບ ແຫຼ່ງກຳເນີດສິນຄ້າ.
2. ໃນກໍລະນີພິເສດທີ່ໃບຢັ້ງຢືນແຫຼ່ງກຳເນີດບໍ່ໄດ້ອອກໃນຂະນະທີ່ສົ່ງສິນຄ້າອອກ ຫຼືພາຍໃນ 3 ມື້ ຫຼັງຈາກທີ່ແຈ້ງການຂົນສົ່ງສິນຄ້າທາງເຮືອ ເນື່ອງຈາກຄວາມຜິດພາດ ຫຼື ຫຼົງລືມໂດຍບໍ່ໄດ້ຕັ້ງໃຈ ຫຼື ຍ້ອນສາເຫດອື່ນທີ່ຮັບຟັງໄດ້ ໃນກໍລະນີດັ່ງນີ້ສາມາດອອກ ໃບຢັ້ງຢືນແຫຼ່ງກຳເນີດຍ້ອນຫຼັງໄດ້ ແຕ່ຕ້ອງບໍ່ເກີນໜຶ່ງປີນັບຈາກວັນທີ່ຂົນສົ່ງສິນຄ້າ ທາງເຮືອ ໂດຍໃຊ້

ເຄື່ອງໝາຍທີ່ຈະແຈ້ງວ່າ "Issued Retroactively".

## ມາດຕາ 11
## ການສູນຫາຍຂອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ

ໃນກໍລະນີທີ່ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຖືກລັກຂະໂມຍ, ສູນຫາຍ ຫຼື ຖືກທຳລາຍ ຜູ້ສົ່ງອອກຕ້ອງຍື່ນຄຳຮ້ອງເປັນລາຍລັກອັກສອນຕໍ່ໜ່ວຍງານຜູ້ມີອຳນາດອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ເພື່ອຮັບຮອງວ່າສຳເນົາຖືກຕ້ອງຕາມຕົ້ນສະບັບ ແລະ ສຳເນົາສະບັບທີ່ສອງ ທີ່ໃຊ້ເປັນເອກະສານສົ່ງອອກນີ້ ໃຫ້ມີການຮັບຮອງໂດຍມີຄຳວ່າ Certified True Copy ໃນຊ່ອງທີ 12. ໃບຢັ້ງຢືນສະບັບນີ້ຈະລະບຸວັນທີ່ອອກວັນດຽວກັນກັບໃບຢັ້ງຢືນຕົ້ນສະບັບ ການຮັບຮອງສຳເນົາທີ່ຖືກຕ້ອງຈະສາມາດເຮັດໄດ້ໃນໄລຍະເວລາບໍ່ເກີນ 1 ປີ ຕັ້ງແຕ່ວັນທີອອກໜັງສືຢັ້ງຢືນແຫຼ່ງກຳເນີດສິນຄ້າຕົ້ນສະບັບ.

## ມາດຕາ 12
## ການຍື່ນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ

1. ເພື່ອຈຸດປະສົງໃນການສະເໜີຂໍຮັບສິດທິພິເສດທາງດ້ານພາສີ ໃນຂະນະທີ່ນຳເຂົ້າ ຜູ້ນຳເຂົ້າຈະຍື່ນໃບແຈ້ງ ແລະ ໜັງສືຮັບຮອງແຫຼ່ງກຳເນີດສິນຄ້າ ພ້ອມທັງເອກະສານທີ່ເປັນຫຼັກຖານສະໜັບສະໜູນ (ເຊັ່ນ: ໃບສັ່ງສິນຄ້າ ແລະ ໃບຂົນສົ່ງສິນຄ້າທີ່ລະບຸເສັ້ນທາງການຂົນສົ່ງສິນຄ້າຕະຫຼອດທາງ ທີ່ອອກໃນຂົງເຂດຜູ້ສົ່ງອອກເມື່ອມີຄວາມຈຳເປັນຕ້ອງໃຊ້) ແລະ ເອກະສານກ່ຽວຂ້ອງອື່ນໆ ທີ່ຈຳເປັນຕາມ ກົດໝາຍ ແລະ ກົດລະບຽບພາຍໃນປະເທດຜູ້ນຳເຂົ້າ ຕໍ່ໜ່ວຍງານດ້ານພາສີຂອງປະເທດຜູ້ນຳເຂົ້າ.
2. ໃນກໍລະນີທີ່ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ(Form S)ຖືກປະຕິເສດຈາກໜ່ວຍງານດ້ານພາສີຂອງປະເທດຜູ້ນຳເຂົ້າ ຫົວຂໍ້ຂອງໃບແຫຼ່ງກຳເນີດສິນຄ້າຕ້ອງໄດ້ຖືກບັນທຶກໄວ້ໃນຫ້ອງທີ 4 ຂອງຟອມ ແລະ ຕົ້ນສະບັບໃບຢັ້ງຢືນແຫຼ່ງກຳເນີດຈະຕ້ອງຖືກສົ່ງກັບຜູ້ອອກໃບຢັ້ງ ຢືນພາຍໃນ 60 ວັນ ຜູ້ອອກໃບຢັ້ງຢືນຈະຕ້ອງແຈ້ງໃຫ້ຜູ້ສົ່ງອອກຮັບຮູ້ເຖິງເຫດຜົນທີ່ຖືກປະຕິເສດໃຫ້ສິດທິພິເສດທາງດ້ານພາສີ.
3. ໃນກໍລະນີທີ່ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຖືກປະຕິເສດຈາກໜ່ວຍງານດ້ານພາສີຂອງປະເທດຜູ້ນຳເຂົ້າ ທີ່ໄດ້ແຈ້ງໃນຫົວຂໍ້ຂ້າງເທິງ, ທາງຝ່າຍຜູ້ນຳເຂົ້າຕ້ອງໄດ້ຍອມຮັບ ແລະ ພິຈາລະ ນາ ຄຳອະທິບາຍຂອງຝ່າຍອອກໃບຢັ້ງຢືນ ແລະ ປະເມີນອີກເທື່ອໜຶ່ງວ່າ Form S ສາມາດໄດ້ຮັບອະນຸຍາດໃຫ້ໄດ້ຮັບສິດທິພິເສດທາງດ້ານພາສີ. ການອະທິບາຍຈະຕ້ອງກ່ຽວກັບຄຳຕອບຢ່າງເປັນລາຍລະອຽດ ແລະ ຢ່າງໝົດທຸກປະເດັນຂອງການຖືກປະຕິເສດຂອງຝ່າຍນຳເຂົ້າ.

## ມາດຕາ 13
## ກຳນົດເວລາຜົນສັກສິດຂອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ຟອມ S)

ກຳນົດເວລາຍື່ນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຟອມ S ໄດ້ກຳນົດຄື:

1. ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ຟອມ S) ມີຜົນສັກສິດແມ່ນ 12 ເດືອນນັບແຕ່ມື້ອອກ, ແລະຕ້ອງໄດ້ຍື່ນໃຫ້ເຈົ້າໜ້າທີ່ພາສີປະເທດຄູ່ສັນຍາພາຍໃນເວລານັ້ນ.
2. ໃນກໍລະນີທີ່ຍື່ນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ໃຫ້ໜ່ວຍງານພາສີຂອງປະເທດຜູ້ນຳເຂົ້າຫຼັງຈາກກຳນົດເວລາຍື່ນ ເນື່ອງຈາກວ່າເຫດຜົນສຸດວິໄສທີ່ເກີນການຄວບຄຸມຂອງຜູ້ສົ່ງອອກທີ່ສົມເຫດສົມຜົນຮັບຟັງໄດ້ ໃນກໍລະນີນີ້ໃຫ້ຍອມຮັບໃບຢັ້ງຢືນແຫຼ່ງກຳເນີດ ສິນຄ້າດັ່ງກ່າວໄດ້.
3. ບໍ່ວ່າໃນກໍລະນີໃດກໍ່ຕາມໜ່ວຍງານພາສີຂອງປະເທດຜູ້ນຳເຂົ້າ ຈະຕ້ອງຍອມຮັບໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ຍື່ນຫຼັງຈາກໝົດກຳນົດເວລາດັ່ງກ່າວຂ້າງເທິງ ຫາກວ່າສິນຄ້າໄດ້ຖືກນຳເຂົ້າກ່ອນທີ່ຈະໝົດກຳນົດເວລາດັ່ງກ່າວ.

## ມາດຕາ 14
## ການຍົກເວັ້ນການໃຊ້ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ

ໃນກໍລະນີທີ່ມີການສົ່ງສິນຄ້າທີ່ມີແຫຼ່ງກຳເນີດໃນປະເທດຄູ່ສັນຍາຜູ້ສົ່ງອອກຊຶ່ງມີມູນຄ່າບໍ່ເກີນ USD 200 ຕາມລາຄາ FOB, ໃຫ້ຍົກເວັ້ນການໃຊ້ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ແລະ ໃຫ້ຜູ້ສົ່ງອອກໃຊ້ວິທີງ່າຍໃນການສະແດງວ່າສິນຄ້າມີແຫຼ່ງກຳເນີດໃນປະເທດຜູ້ສົ່ງອອກ ແລະ ໃຫ້ໃຊ້ວິທີປະຕິບັດຄ້າຍຄືກັນກັບສິນຄ້າທີ່ສົ່ງທາງໄປສະນີທີ່ມີມູນຄ່າບໍ່ເກີນ USD 200 ຕາມລາຄາ FOB.

## ມາດຕາ 15
## ວິທີປະຕິບັດຕໍ່ຄວາມແຕກຕ່າງກັນເລັກນ້ອຍໃນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ

1. ໃນກໍລະນີທີ່ສິນຄ້າບໍ່ມີຂໍ້ສົງໄສໃດໆກ່ຽວກັບແຫຼ່ງກຳເນີດສິນຄ້າ, ແຕ່ວ່າພົບວ່າມີຄວາມແຕກຕ່າງກັນເລັກນ້ອຍ ເຊັ່ນ: ມີຄວາມຜິດພາດເລັກນ້ອຍຂອງການພິມໃນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຫຼື ມີຄວາມແຕກຕ່າງລະຫວ່າງຂໍ້ຄວາມທີ່ລະບຸໃນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າກັບຂໍ້ຄວາມໃນເອກະສານຕ່າງໆ ທີ່ຍື່ນຕໍ່ໜ່ວຍງານພາສີຂອງປະເທດນຳເຂົ້າ ເພື່ອດຳເນີນການນຳເຂົ້າ ໃນກໍລະນີນີ້ຈະບໍ່ເຮັດໃຫ້ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າເສຍໄປ ຫາກວ່າບັນດາຄວາມແຕກຕ່າງນີ້ຍັງແທດເໝາະສອດຄ້ອງກັບສິນຄ້າທີ່ຍື່ນ.
2. ໃນກໍລະນີທີ່ປະເທດຜູ້ສົ່ງອອກ ແລະ ປະເທດຜູ້ນຳເຂົ້າມີຄວາມແຕກຕ່າງກັນທາງດ້ານ

ພາສີທີ່ໄດ້ຮັບສິດທິພິເສດທາງດ້ານພາສີ ໃຫ້ສິນຄ້ານັ້ນຈ່າຍພາສີພາຍໃຕ້ MFN ໃນອັດຕາທີ່ສູງກ່ວາ ແລະ ບໍ່ຕ້ອງຈ່າຍຄ່າຊົດເຊີຍໃດໆອີກ ເມື່ອບັນຫາຄວາມແຕກຕ່າງທາງດ້ານອັດຕາພາສີໄດ້ຖືກແກ້ໄຂ ແລະ ຈະນໍາອັດຕາພາສີທີ່ຖືກຕ້ອງມາໃຊ້ ແລະ ຈະໄດ້ຮັບຄ່າພາສີທີ່ຈ່າຍເກີນຄືນ ຕາມກົດ ແລະ ລະບຽບທີ່ກ່ຽວຂ້ອງຂອງປະເທດຜູ້ນໍາເຂົ້າ ຫຼັງຈາກບັນຫາທັງໝົດຖືກແກ້ໄຂແລ້ວ.

3. ໃນກໍລະນີໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ລະບຸຫຼາຍລາຍການສິນຄ້າໃນສະບັບດຽວ ຫາກວ່າລາຍການໃດໜຶ່ງມີບັນຫາໃນການນໍາເຂົ້າ ຈະບໍ່ສົ່ງຜົນກະທົບ ຫຼື ເຮັດໃຫ້ເກີດຄວາມລ່າຊ້າໃນການໄດ້ຮັບສິດທິພິເສດຂອງລາຍການອື່ນໆໃນໃບຢັ້ງຢືນສະບັບດຽວ ກັນ ສ່ວນສິນຄ້າທີ່ມີບັນຫາໃຫ້ປະຕິບັດຕາມຂໍ້ 3, ມາດຕາ 17.

## ມາດຕາ 16
## ການເກັບຮັກສາເອກະສານ

1. ເພື່ອຈຸດປະສົງຂອງການກວດສອບຕາມລະບຽບຂອງ 17 ແລະ 18, ຜູ້ຜະລິດ ຫຼື ຜູ້ສົ່ງອອກທີ່ຍື່ນຄໍາຮ້ອງຂໍໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ ຈະຕ້ອງເກັບໜັງສືຮັບຮອງສະໜັບສະໜູນໃນການຍື່ນຄໍາຂໍເປັນເວລາ 3 ປີ ນັບຈາກວັນອອກໜັງສືຢັ້ງຢືນແຫຼ່ງກໍາເນີດສິນຄ້າ ຟອມ S ທັງນີ້ກໍ່ເພື່ອໃຫ້ເປັນໄປຕາມກົດໝາຍ ແລະ ກົດລະບຽບພາຍໃນປະເທດຜູ້ສົ່ງອອກ.

2. ໜ່ວຍງານຜູ້ອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າຈະເກັບຮັກສາໃບຄໍາຮ້ອງ ແລະ ເອກະສານອື່ນໆ ກ່ຽວກັບການຍື່ນຄໍາຂໍແຫຼ່ງກໍາເນີດສິນຄ້າຟອມ S ເປັນເວລາ 3 ປີ ນັບຈາກວັນອອກໜັງສືຢັ້ງຢືນແຫຼ່ງກໍາເນີດສິນຄ້າ.

3. ຂໍ້ມູນຕ່າງໆທີ່ກ່ຽວຂ້ອງກັບຄວາມຖືກຕ້ອງສົມບູນຂອງໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າຈະຕ້ອງຈັດສົ່ງໃຫ້ແກ່ປະເທດຜູ້ນໍາເຂົ້າຕາມທີ່ໄດ້ຮັບການຮ້ອງຂໍ ໂດຍມີລາຍເຊັນຈາກເຈົ້າ

ໜ້າທີ່ຂອງລັດທີ່ມີອໍານາດໃນການເຊັນໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ ແລະ ຮັບຮອງຄວາມຖືກຕ້ອງຈາກໜ່ວຍລັດຖະບານທີ່ເໝາະສົມ.

4. ຂໍ້ມູນຕ່າງໆທີ່ໃຊ້ຕິດຕໍ່ກັນລະຫ່ວາງປະເທດຫຸ້ນສ່ວນຈະຕ້ອງຮັກສາເປັນຄວາມລັບແລະຈະນໍາມາໃຊ້ເພື່ອຈຸດປະສົງຂອງການກວດສອບຄວາມຖືກຕ້ອງສົມບູນຂອງໃບຮັບຮອງແຫຼ່ງກໍາເນີດຂອງສິນຄ້າຟອມ S ເທົ່ານັ້ນ.

## ມາດຕາ 17
## ການກວດສອບຍ້ອນຫຼັງ

ປະເທດສະມາຊິກຜູ້ນໍາເຂົ້າອາດຮ້ອງຂໍຕໍ່ໜ່ວຍງານຜູ້ມີອໍານາດອອກໃບຢັ້ງຢືນແຫຼ່ງ

ກຳເນີດສິນຄ້າຂອງປະເທດຜູ້ສົ່ງອອກໃຫ້ມີການກວດສອບຍ້ອນຫຼັງໂດຍການເລືອກແບບສັກສຸ່ມ ແລະ/ຫຼື ເມື່ອມີເຫດຜົນອັນຄວນສົງໄສກ່ຽວກັບຄວາມແທ້ຈິງຂອງເອກະສານ ຫຼື ຄວາມຖືກຕ້ອງຂອງຂໍ້ມູນໃນເອກະສານກ່ຽວຂ້ອງກັບແຫຼ່ງກຳເນີດຂອງສິນຄ້າທີ່ຕ້ອງສົງໄສຫຼື ບາງສ່ວນຂອງສິນຄ້ານັ້ນ ເມື່ອມີການຮ້ອງຂໍດັ່ງກ່າວໜ່ວຍງານຜູ້ມີອຳນາດອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຂອງປະເທດຜູ້ສົ່ງອອກໃຈະຕ້ອງກວດສອບຍ້ອນຫຼັງ ຕາມເອກະສານຊີ້ແຈງຕົ້ນທຶນການຜະລິດຂອງຜູ້ຜະລິດ/ຜູ້ສົ່ງອອກໂດຍໃຊ້ຕົ້ນທຶນ ແລະ ລາຄາໃນເວລາທີ່ກະທຳການສົ່ງອອກ ແຕ່ຢູ່ໃນໄລຍະເວລາ 6 ເດືອນ ໂດຍມີເງື່ອນໄຂຕໍ່ໄປນີ້:

1. ຄຳຮ້ອງຂໍໃຫ້ກວດສອບຍ້ອນຫຼັງຈະຖືກສົ່ງໄປພ້ອມກັບໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ກ່ຽວຂ້ອງ ແລະ ລະບຸເຫດຜົນ ຮວມທັງຂໍ້ມູນທີ່ຊີ້ໃຫ້ເຫັນຄວາມບໍ່ຖືກຕ້ອງຂອງໃບຢັ້ງຢືນສະບັບນັ້ນ ຍົກເວັ້ນການກວດຍ້ອນຫຼັງໂດຍໃຊ້ວິທີສັກສຸ່ມ.

2. ໜ່ວຍງານຜູ້ມີອຳນາດຜູ້ມີອຳນາດອອກໃບຢັ້ງຢືນແຫຼ່ງກຳເນີດທີ່ໄດ້ຮັບການຮ້ອງຂໍໃຫ້ກວດສອບເອກະສານຍ້ອນຫຼັງ ຈະຕ້ອງດຳເນີນການຕາມຄຳຮ້ອງຂໍໂດຍທັນທີທີ່ໄດ້ຮັບເອກະສານ ແລະ ແຈ້ງໃຫ້ຮັບຮູ້ພາຍໃນ 90 ມື້ ນັບຈາກວັນທີ່ໄດ້ຮັບຄຳຮອ້ງຂໍ.

3. ໜ່ວຍງານທາງດ້ານພາສີຂອງປະເທດຜູ້ນຳເຂົ້າ ອາດຢຸດການໃຫ້ສິດທິພິເສດທາງດ້ານພາສີໃຫ້ແກ່ສິນຄ້າດັ່ງກ່າວໃນເວລາຖ້າຟັງຄຳຕອບຈາກການກວດສອບ ແຕ່ຫາກວ່າສິນຄ້ານັ້ນບໍ່ແມ່ນສິນຄ້າຕ້ອງຫ້າມ ຫຼື ຕ້ອງຈຳກັດໃນການນຳເຂົ້າ ແລະ ບໍ່ມີຂໍ້ສົງໄສໃນການສໍ້ໂກງທາງລັດຖະບານຈະປ່ອຍສິນຄ້ານັ້ນໄປໃຫ້ຜູ້ນຳເຂົ້າກ່ອນ ເພື່ອໃຫ້ມີການບໍລິຫານທີ່ເຫັນວ່າຈຳເປັນ.

4. ໜ່ວຍງານທີ່ມີອຳນາດອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຈະສົ່ງຜົນການກວດສອບດັ່ງກ່າວໃຫ້ປະເທດຜູ້ນຳເຂົ້າທັນທີ ໂດຍປະເທດຜູ້ນຳເຂົ້າຈະພິຈາລະນາວ່າສິນຄ້ານັ້ນໄດ້ຮັບສິດທິພິເສດ ຫຼື ບໍ່, ໂດຍຂະບວນການກວດສອບຍ້ອນຫຼັງທັງໝົດ ລວມເຖິງການແຈ້ງໃຫ້ຂັ້ນຕອນການແຈ້ງໃຫ້ໜ່ວຍງານຜູ້ມີສິດອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້ານັ້ນໄດ້ມາດຖານ ຫຼື ບໍ່ຂອງປະເທດຜູ້ສົ່ງອອກຮັບຮູ້ເຖິງຜົນພິຈາລະນາພາຍໃນໄລຍະເວລາ 180 ມື້, ໂດຍຂະນະທີ່ລໍຖ້າຜົນພິຈາລະນາໃຫ້ປະຕິບັດຕາມຂໍ້ 3, ມາດຕານີ້.

## ມາດຕາ 18
## ການກວດສອບໂດຍກົງ

ໃນກໍລະນີບໍ່ຕອບສະໜອງພຽງພໍກັບຜົນການກວດສອບທີ່ຍົກຂຶ້ນໃນມາດຕາ 17, ໃນບາງກໍລະນີທີ່ແນ່ນອນ, ປະເທດຜູ້ນຳເຂົ້າສາມາດສະເໜີໃຫ້ໄປກວດສອບໂດຍກົງທີ່ປະເທດສົ່ງອອກ.

1. ກ່ອນທີ່ຈະທຳການກວດສອບໂດຍກົງທີ່ປະເທດສົ່ງອອກ, ປະເທດຜູ້ນຳເຂົ້າຈະຕ້ອງປະຕິບັດດັ່ງນີ້:

    ກ) ແຈ້ງເຈດຕະນາຂອງການຢ້ຽມຢາມເພື່ອໄປເບິ່ງການກວດສອບໂດຍກົງທີ່ປະເທດຜູ້ສົ່ງອອກເປັນລາຍລັກອັກສອນໄປໃຫ້:

- ຜູ້ສົ່ງອອກ/ຜູ້ຜະລິດທີ່ເປັນເຈົ້າຂອງໂຮງງານຈະຖືກກວດສອບໂດຍກົງ;
- ໜ່ວຍງານຜູ້ມີອຳນາດອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຂອງປະເທດທີ່ເປັນເຈົ້າຂອງຂົງເຂດຈະຖືກກວດສອບໂດຍກົງ;
- ໜ່ວຍງານພາສີຂອງປະເທດທີ່ເປັນເຈົ້າຂອງຂົງເຂດຈະຖືກກວດສອບໂດຍກົງ; ແລະ
- ຜູ້ນຳເຂົ້າທີ່ມີສິນຄ້າຕ້ອງໄດ້ກວດສອບ.

ຂ) ການແຈ້ງເຈດຕະນາຕາມຫົວຂໍ້ 1 (ກ) ຂອງມາດຕານີ້ ຈະຕ້ອງສະແດງລາຍລະອຽດ, ໃນນັ້ນນອກຈາກບັນດາເນື້ອໃນອື່ນ, ຕ້ອງມີບັນດາເນື້ອໃນຄື:

- ຊື່ຂອງໜ່ວຍງານທາງດ້ານພາສີທີ່ເປັນຜູ້ແຈ້ງເຈດຕະນາທີ່ຈະໄປຢ້ຽມຢາມ;
- ຊື່ຂອງຜູ້ສົ່ງອອກ/ຜູ້ຜະລິດທີ່ເປັນເຈົ້າຂອງໂຮງງານທີ່ຖືກກວດສອບໂດຍກົງ;
- ກຳນົດວັນທີທີ່ຈະກວດສອບໂດຍກົງ;
- ຂອບເຂດສະເໜີກວດສອບລວມທັງລາຍການສິນຄ້າທີ່ຕ້ອງການກວດສອບ; ແລະ
- ຊື່ ແລະ ຕຳແໜ່ງຂອງເຈົ້າໜ້າທີ່ທີ່ຈະທຳການການກວດສອບ.

ຄ) ຕ້ອງໄດ້ຮັບການຍິນຍອມຕອບຮັບເປັນລາຍລັກອັກສອນຂອງຜູ້ສົ່ງອອກ/ຜູ້ຜະລິດ ທີ່ເປັນເຈົ້າຂອງໂຮງງານທີ່ຖືກກວດສອບ.

2. ຫາກບໍ່ໄດ້ຮັບການຍິນຍອມຕອບຮັບເປັນລາຍລັກອັກສອນຂອງຜູ້ສົ່ງອອກ/ຜູ້ຜະລິດທີ່ເປັນເຈົ້າຂອງໂຮງງານທີ່ຈະທຳການກວດສອບພາຍໃນ 30 ວັນ ນັບຈາກວັນທີ່ໄດ້ການແຈ້ງການຕາມຫົວຂໍ້ 1(ກ) ຂອງມາດຕານີ້ ປະເທດທີ່ເປັນຜູ້ແຈ້ງສາມາດປະຕິເສດການໃຫ້ສິດທິພິເສດທາງດ້ານພາສີຕໍ່ສິນຄ້າທີ່ຕ້ອງການໄປຢ້ຽມຢາມເພື່ອເບິ່ງການກວດສອບໄດ້.

3. ເມື່ອໜ່ວຍງານຜູ້ມີອຳນາດອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າໄດ້ຮັບແຈ້ງການແລ້ວສາມາດເລື່ອນວັນຂໍຢ້ຽມຢາມໄດ້ ແລະ ແຈ້ງໃຫ້ປະເທດຜູ້ກວດສອບໄດ້ຮັບຮູ້ ແຕ່ວ່າການຢ້ຽມຢາມການກວດສອບຈະຕ້ອງກະທຳໃຫ້ສຳເລັດພາຍໃນ 60 ມື້ ນັບຈາກມື້ທີ່ໄດ້ຮັບແຈ້ງການ ຫຼື ອາດດົນກວ່ານັ້ນແລ້ວແຕ່ການຕົກລົງຂອງທັງສອງຝ່າຍ.

4. ປະເທດຜູ້ນຳເຂົ້າທີ່ຂໍໄປຢ້ຽມຢາມເພື່ອໄປເບິ່ງການກວດສອບ ຈະຈັດຕຽມຜົນການຕັດສິນທີ່ເປັນລາຍລັກອັກສອນວ່າສິນຄ້າດັ່ງກ່າວໄດ້ຮັບສິດທິພິເສດທາງດ້ານພາສີຫຼື ບໍ່ ໃຫ້ແກ່ຜູ້ສົ່ງອອກ/ຜູ້ຜະລິດສິນຄ້າທີ່ຕ້ອງການກວດສອບ ແລະ ໜ່ວຍງານຜູ້ມີອຳນາດອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ກ່ຽວຂ້ອງ.

5. ການຢຸດໃຫ້ສິດທິພິເສດຊົ່ວຄາວຈະຖືກຍົກເລີກຫຼັງຈາກມີການກຳນົດດ້ວຍລາຍລັກອັກສອນທີ່ຍົກຂຶ້ນໃນຂໍ້ 4 ຂອງມາດຕານີ້ ຖືວ່າຜະລິດຕະພັນນັ້ນແມ່ນສິນຄ້າມີແຫຼ່ງກຳເນີດ.

6. ຜູ້ສົ່ງອອກ/ຜູ້ຜະລິດໄດ້ເວລາອີກ 30 ວັນ ນັບຈາກວັນທີໄດ້ຮັບຜົນການຕັດສິນທີ່ເປັນລາຍລັກອັກສອນ ໃນການຈັດຕຽມຂໍ້ຄິດເຫັນເປັນລາຍລັກອັກສອນ ຫຼື ຂໍ້ມູນເພີ່ມຕື່ມທີ່ກ່ຽວຂ້ອງກັບຄວາມທີ່ສິນຄ້າຄວນໄດ້ແຫຼ່ງກຳເນີດ ຫາກວ່າຍັງຄົງພົບວ່າສິນຄ້ານັ້ນບໍ່ໄດ້ແຫຼ່ງກຳ

ເບີດຜົນການຕັດສິນສຸດທ້າຍຈະຖືກສົ່ງໄປໃຫ້ໜ່ວຍງານຜູ້ມີອຳນາດອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃນ 30 ມື້ ນັບຈາກມື້ທີ່ໄດ້ຮັບຂໍ້ຄິດເຫັນ/ຂໍ້ມູນເພີ່ມຕື່ມຈາກຜູ້ສົ່ງອອກ/ຜູ້ຜະລິດ.

7. ຂະບວນການຢ້ຽມຢາມເພື່ອເບິ່ງການກວດສອບ ລວມເຖິງການຢ້ຽມຢາມທີ່ແທ້ຈິງ ຜົນການຕັດສິນໃຈວ່າສິນຄ້າດັ່ງກ່າວໄດ້ແຫຼ່ງກຳເນີດຫຼື ບໍ່ ຈະຕ້ອງດຳເນີນການໃຫ້ແລ້ວ ແລະ ຕ້ອງແຈ້ງຜົນໃຫ້ໜ່ວຍງານຜູ້ມີອຳນາດອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃນ 180 ມື້ ໂດຍລະຫວ່າງການລໍຖ້າຜົນການກວດສອບ ໃຫ້ປະຕິບັດຕາມຫົວຂໍ້ 3, ມາດຕາ 17 ວ່າດ້ວຍການລະງັບສິດທິອັດຕາພາສີພິເສດ.

## ມາດຕາ 19
## ການເກັບຮັກສາຄວາມລັບ

ບັນດາປະເທດຄູ່ສັນຍາຕ້ອງປະຕິບັດໃຫ້ສອດຄ່ອງກັບກົດໝາຍພາຍໃນປະເທດຕົນເອງກ່ຽວກັບການຮັກສາຄວາມລັບຂອງຂໍ້ມູນທີ່ເປັນຄວາມລັບທາງທຸລະກິດ ຊຶ່ງລວບລວມລະຫວ່າງຂະບວນການກວດສອບມາດຕາ 17 ແລະ 18 ຈະຕ້ອງປ້ອງກັນບໍ່ໃຫ້ຂໍ້ມູນຊຶ່ງອາດກໍ່ໃຫ້ເກີດຄວາມເສຍຫາຍຕໍ່ການແຂ່ງຂັນຂອງຜູ້ໃຫ້ຂໍ້ມູນ ຂໍ້ມູນທີ່ເປັນຄວາມລັບທາງດ້ານທຸລະກິດຈະເປີດເຜີຍໄດ້ສະເພາະກັບໜ່ວຍງານທີ່ຮັບຜິດຊອບທາງດ້ານບໍລິຫານ ແລະ ການນຳໃຊ້ໃນການຕັດສິນແຫຼ່ງກຳເນີດເທົ່ານັ້ນ.

## ມາດຕາ 20
## ເອກະສານສຳລັບການຂົນສົ່ງໂດຍກົງ

ເພື່ອຈຸດປະສົງຂອງການປະຕິບັດໃຫ້ເກີດຜົນຕາມມາດຕາ 8(2)(ຂ) ຂອງເອກະສານຊ້ອນທ້າຍ 1 ນີ້, ເມື່ອສິນຄ້າມີການຂົນສົ່ງສິນຄ້າຜ່ານຂົງເຂດຂອງປະເທດທີ່ບໍ່ແມ່ນຫຸ້ນສ່ວນຕັ້ງແຕ່ໜຶ່ງປະເທດຂຶ້ນໄປ ເອກະສານດັ່ງຕໍ່ໄປນີ້ຈະຕ້ອງນຳມາຍື່ນສະແດງຕໍ່ໜ່ວຍງານເຈົ້າໜ້າທີ່ພາສີຂອງປະເທດຄູ່ສັນຍາຜູ້ນຳເຂົ້າ:

1. ໃບຮັບທີ່ບໍລິສັດຂົນສົ່ງອອກໃຫ້ຜູ້ສົ່ງສິນຄ້າທີ່ລະບຸເສັ້ນທາງຂົນສົ່ງໄວ້ຕະຫຼອດທາງ;
2. ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຟອມ S ທີ່ອອກໃຫ້ໂດຍໜ່ວຍງານທີ່ກ່ຽວຂ້ອງໃນປະເທດຫຸ້ນສ່ວນຜູ້ສົ່ງອອກ;
3. ສຳເນົາໃບຂົນສົ່ງລາຄາສິນຄ້າ; ແລະ
4. ບັນດາເອກະສານຢັ້ງຢືນທີ່ກ່ຽວຂ້ອງອື່ນໆພິສູດເຖິງບັນດາຄວາມຕ້ອງການຕອບສະໜອງຕາມລະບຽບການຂົນສົ່ງໂດຍກົງ.

## ລະບຽບ 21
## ສິນຄ້າວາງສະແດງ

1. ສິນຄ້າທີ່ປະເທດຄູ່ສັນຍາສົ່ງອອກ ເພື່ອໃຊ້ໃນງານສະແດງສິນຄ້າໃນປະເທດຄູ່ສັນຍາອີກປະເທດໜຶ່ງ ແລະ ໄດ້ຂາຍໄປໃນລະຫວ່າງ ຫຼື ວ່າຫຼັງການວາງສະແດງສິນຄ້າໄດ້ສິ້ນສຸດລົງ ເພື່ອນຳເຂົ້າມາຍັງປະເທດ ຈະໄດ້ຮັບສິດທິພິເສດທາງດ້ານພາສີ ທັງນີ້ຕ້ອງອີງຕາມເງື່ອນໄຂວ່າສິນຄ້າດັ່ງກ່າວຕ້ອງມີຄຸນະສົມບັດຖືກຕ້ອງຕາມຂໍ້ກຳນົດຂອງກົດວ່າດ້ວຍແຫຼ່ງກຳເນີດສິນຄ້າ ແລະ ສະແດງໃຫ້ເປັນທີ່ພໍໃຈຂອງໜ່ວຍງານເຈົ້າໜ້າທີ່ພາສີທີ່ກ່ຽວຂ້ອງໃນປະເທດຜູ້ນຳເຂົ້າວ່າ:

   ກ) ຜູ້ສົ່ງອອກໄດ້ສົ່ງສິນຄ້າເຫຼົ່ານັ້ນຈາກຂົງເຂດຂອງປະເທດຄູ່ສັນຍາຜູ້ສົ່ງອອກໄປຍັງປະເທດທີ່ຈັດວາງສະແດງສິນຄ້າ ແລະ ໄດ້ຕັ້ງສະແດງໃນງານດັ່ງກ່າວ;

   ຂ) ຜູ້ສົ່ງອອກໄດ້ຂາຍ ຫຼື ໂອນສິນຄ້ານັ້ນໃຫ້ແກ່ຜູ້ຮັບສິນຄ້າໃນປະເທດຜູ້ນຳເຂົ້າ;

   ຄ) ສິນຄ້ານັ້ນໄດ້ຮັບການສົ່ງມອບໃນສະພາບດຽວກັນກັບທີ່ໄດ້ຮັບການສົ່ງເພື່ອໄປໃຊ້ໃນງານວາງສະແດງສິນຄ້າໄປຍັງປະເທດຄູ່ສັນຍາຜູ້ນຳເຂົ້າ ໃນລະຫວ່າງ ຫຼື ວ່າຫຼັງການວາງສະແດງສິນຄ້າໄດ້ສິ້ນສຸດລົງ;

2. ເພື່ອຈຸດປະສົງຂອງການປະຕິບັດຂໍ້ກຳນົດທີ່ 1 ຂ້າງເທິງໃຫ້ເກີດຜົນຕາມເນື້ອໃນເບື້ອງຕົ້ນ ໃບຢັ້ງຢືນແຫຼ່ງ ກຳເນີດສິນຄ້າຟອມ S ຕ້ອງສະແດງຍື່ນຕໍ່ໜ່ວຍງານລັດທີ່ກ່ຽວຂ້ອງຂອງປະເທດຜູ້ນຳເຂົ້າ ໂດຍຕ້ອງລະບຸຊື່ ແລະ ທີ່ຢູ່ຂອງງານວາງສະແດງສິນຄ້າ.

3. ໃຫ້ເນື້ອໃນຂອງຫົວຂໍ້ 1 ສາມາດໃຊ້ບັງຄັບງານວາງສະແດງສິນຄ້າທີ່ຄ້າຂາຍທຸກຊະນິດ, ການສະແດງດ້ານກະສິກຳ, ຫັດຖະກຳ ຫຼື ງານສະແດງສິນຄ້າທີ່ຄ້າຍຄືກັນ ຫຼື ໃນຮູບຂອງຮ້ານຈຳໜ່າຍສິນຄ້າ ໂດຍມີຈຸດມຸ່ງໝາຍຂາຍສິນຄ້າຕ່າງປະເທດ ແລະ ສິນຄ້າເຫຼົ່ານັ້ນຢູ່ໃນການຄວບຄຸມຂອງເຈົ້າໜ້າທີ່ພາສີໃນລະຫ່ວາງການສະແດງ.

## ລະບຽບ 22
## ໃບເກັບເງິນ (ອິນວອຍ) ທີ່ອອກໂດຍປະເທດທີສາມ
## ( Third Country Invoicing )

1. ໜ່ວຍງານເຈົ້າໜ້າພາສີທີ່ກ່ຽວຂ້ອງໃນປະເທດຜູ້ນຳເຂົ້າຈະຕ້ອງຍອມຮັບໃບຢັ້ງຢືນແຫຼ່ງກຳເນີດ ຂອງສິນຄ້າໃນກໍລະນີທີ່ໃບເກັບເງິນອອກໂດຍບໍລິສັດທີ່ຢູ່ນອກຂົງເຂດປະເທດຄູ່ສັນຍາຜູ້ສົ່ງອອກ ຫຼື ຜູ້ສົ່ງອອກລາວ/ຫວຽດ ທີ່ຮັບຜິດຊອບດ້ານບັນຊີຂອງບໍລິສັດດັ່ງກ່າວທາກວ່າສິນຄ້ານັ້ນຕົງກັບຂໍ້ກຳນົດຂອງກົດວ່າດ້ວຍແຫຼ່ງກຳເນີດສິນຄ້າທີ່ຍົກຂຶ້ນໃນເອກະສານຊ້ອນທ້າຍ 1 ນີ້.

2. ຜູ້ສົ່ງອອກ/ຜູ້ຜະລິດຕ້ອງລະບຸ "Third Country Invoicing" ແລະ ຊື່ຂອງບໍລິສັດ

ແລະ ຊື່ຂອງປະເທດ ທີ່ອອກໃບເກັບເງິນໃນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຟອມ S.

## ລະບຽບ 23
## ການປະຕິບັດຕໍ່ພຶດຕິກຳທີ່ຫຼອກລວງສໍ້ໂກງ

1. ເມື່ອມີຂໍ້ສົງໃສວ່າມີການກະທຳທີ່ສໍ້ໂກງທີ່ກ່ຽວຂ້ອງກັບໃບຢັ້ງຢືນແຫຼ່ງກຳເນີດສິນຄ້າເກີດຂຶ້ນໜ່ວຍງານລັດທີ່ກ່ຽວຂ້ອງຈະຮ່ວມມືກັນໃນການດຳເນີນການຕໍ່ຜູ້ມີສ່ວນຮ່ວມໃນການກະທຳນັ້ນໃນປະເທດຂອງຕົນ.
2. ແຕ່ລະປະເທດຄູ່ສັນຍາຈະຕ້ອງເຫັນດີອະນຸມັດຢ່າງເປັນທາງການກ່ຽວກັບການລົງໂທດຂອງຜູ້ກະທຳຜິດໃນການສໍ້ໂກງກ່ຽວຂ້ອງກັບໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຟອມ S.

## ລະບຽບ 24
## ຈຸດປະສານງານ

1. ຈຸດປະສານງານຂອງໜ່ວຍງານລັດທີ່ເໝາະສົມສຳຫຼັບທັງສອງຝ່າຍແມ່ນ:
   - ໃນປະເທດຫວຽດນາມ, ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ.
   - ໃນປະເທດລາວ, ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ.
2. ແຕ່ລະຝ່າຍຕ້ອງແຈ້ງໃຫ້ແຕ່ລະຝ່າຍຊາບກ່ຽວກັບລາຍຊື່, ທີ່ຢູ່, ເບີໂທລະສັບ, ເບີແຟັກ ແລະ E-Mail ຂອງຈຸດປະສານງານຫຼັງຈາກການເຫັນດີນຳໃຊ້ ເອກະສານຊ້ອນທ້າຍນີ້, ແລະ ຫາກມີການປ່ຽນແປງໃດໆກ່ຽວກັບຂໍ້ມູນເຫຼົ່ານີ້ໃຫ້ແຈ້ງໃຫ້ ອີກຝ່າຍຮັບຮູ້ພາຍໃນ 30 ວັນ ພາຍຫຼັງທີ່ມີການປ່ຽນແປງດັ່ງກ່າວ./.

# ANNEX 5

# C/O FORM S

| | |
|---|---|
| 1. Goods consigned from (Exporter's business name, address, country) | Reference No. |
| 2. Goods consigned to (Consignee's name, address, country) | VIETNAM-LAOS PREFERENTIAL TARIFF AGREEMENT<br>CERTIFICATE OF ORIGIN<br>(Combined Declaration and Certificate)<br><br>FORM S<br>Issued in ____________<br>(Country)<br>See Overleaf Notes |
| 3. Means of transport and route (as far as known)<br><br>Departure date<br><br>Track's name/Aircraft etc.<br><br>Port of Discharge | 4. For Official Use<br><br>☐ Preferential Treatment Given Under Vietnam-Laos Preferential Tariff Agreement<br><br>☐ Preferential Treatment Not Given (Please state reason/s)<br><br>..............................................................................<br>Signature of Authorised Signatory of the Importing Country |

| 5. Item number | 6. Marks and numbers on packages | 7. Number and type of packages, description of goods (including quantity where appropriate and HS number of the importing country at 8 digit) | 8. Origin criterion (see Notes overleaf) | 9. Gross weight or other quantity and value (FOB) | 10. Number and date of invoices |
|---|---|---|---|---|---|
| | | | | | |

| | |
|---|---|
| 11. Declaration by the exporter<br><br>The undersigned hereby declares that the above details and statement are correct; that all the goods were produced in<br><br>..............................................................................<br>(Country)<br><br>and that they comply with the origin requirements specified for these goods in the Rules of Origin of the Vietnam-Laos Preferential Tariff Agreement for the goods exported to<br><br>..............................................................................<br>(Importing Country)<br><br>..............................................................................<br>Place and date, signature of authorised signatory | 12. Certification<br><br>It is hereby certified, on the basis of control carried out, that the declaration by the exporter is correct.<br><br>..............................................................................<br>Place and date, signature and stamp of certifying authority |
| 13.<br>☐ Third-Country Invoicing ☐ Exhibition<br>☐ Accumulation ☐ De Minimis<br>☐ Partial Cumulation ☐ Issued Retroactively | |

OVERLEAF NOTES

1. Parties which accept this form for the purpose of preferential treatment under the Vietnam-Laos Preferential Tariff Agreement:

LAOS VIETNAM

2. CONDITIONS: The main conditions for admission to the preferential treatment under the Vietnam-Laos Preferential Tariff Agreement are that goods sent to any Party listed above must:

(i) fall within a description of products eligible for concessions in the country of destination;

(ii) comply with the consignment conditions in accordance with Article 8 of Rules of Origin for the Vietnam-Laos Preferential Tariff Agreement (Vietnam-Laos ROO); and

(iii) comply with the origin criteria set out in Vietnam-Laos ROO.

3. ORIGIN CRITERIA: For goods that meet the origin criteria, the exporter and/or producer must indicate in Box 8 of this Form, the origin criteria met, in the manner shown in the following table:

| Circumstances of production or manufacture in the first country named in Box 11 of this form | Insert in Box 8 |
|---|---|
| (a) Goods satisfying Article 3 of Vietnam-Laos ROO (wholly obtained or produced in the exporting Party) | WO |
| (b) Goods satisfying Article 4(1)(a)(i), 4(1)(a)(ii) of Vietnam-Laos ROO | |
| • Local Value Content | Percentage of Vietnam-Laos value content, example: LVC (40%) |
| • Change in Tariff Classification at four-digit level | CTH |
| (c) Goods satisfying Article 6(2) of Vietnam-Laos ROO | "PC x%", where x would be the percentage of Vietnam-Laos value content of less than 40%, example "PC 25%" |

4. EACH ARTICLE MUST QUALIFY: It should be noted that all the goods in a consignment must qualify separately in their own right. This is of particular relevance when similar articles of different sizes or spare parts are sent.

5. DESCRIPTION OF PRODUCTS: The description of products must be sufficiently detailed to enable the products to be identified by the Customs Officers examining them. Name of manufacturer, any trade mark shall also be specified.

6. HARMONISED SYSTEM NUMBER: The Harmonised System number shall be that of in ASEAN Harmonised Tariff Nomenclature (AHTN) Code of the importing Party.

7. EXPORTER: The term "Exporter" in Box 11 may include the manufacturer or the producer.

8. FOR OFFICIAL USE: The Customs Authority of the importing Party must indicate (√) in the relevant boxes in column 4 whether or not preferential treatment is accorded.

9. MULTIPLE ITEMS: For multiple items declared in the same Form S, if preferential treatment is not granted to any of the items, this is also to be indicated accordingly in box 4 and the item number circled or marked appropriately in box 5.

10. THIRD COUNTRY INVOICING: In cases where invoices are issued by a third country, "the Third Country Invoicing" box should be ticked (√) and such information as name and country of the company issuing the invoice shall be indicated in box 7.

11. EXHIBITIONS: In cases where goods are sent from the territory of the exporting Party for exhibition in another Party and sold during or after the exhibition for importation into the territory of such Party, in accordance with Rule 21 of the Operational Certification Procedures, the "Exhibitions" box should be ticked (√) and the name and address of the exhibition indicated in box 2.

12. ISSUED RETROACTIVELY: In exceptional cases, due to involuntary errors or omissions or other valid causes, the Certificate of Origin (Form S) may be issued retroactively, in accordance with Rule 10(2) of the Operational Certification Procedures, the "Issued Retroactively" box should be ticked (√).

13. ACCUMULATION: In cases where the originating materials in a Party are used in the other Party as materials for a finished good, in accordance with Article 6 of the Vietnam-Laos ROO, the "Accumulation" box should be ticked (√).

14. PARTIAL CUMULATION (PC): If the Local Value Content of material is less than 40%, the Certificate of Origin (Form S) may be issued for cumulation purposes, in accordance with Article 6(2) of the Vietnam-Laos ROO, the "Partial Cumulation" box should be ticked (√).

15. *DE MINIMIS*: If the value of all non-originating materials used in its production that do not undergo the required change in tariff classification does not exceed ten (10) percent of the FOB value of the good, in accordance with Article 9 of the Vietnam-Laos ROO, the "*De Minimis*" box should be ticked (√).

Dear Songkarn

We enacted the new Circular on C/O form S and this document will be effective from 5 March 2010. We also printed the new C/O form as well.

But due to the fact that we have not utilized the old C/O form S, may I suggest that we could use both the old C/O form and the new one during the transitional period of 06 months, starting from 1 March 2010.

I look forward to hearing from you soon.

Thanks and best regards
Hoai Hanh

# ຂໍ້ຕົກລົງ

## ລະຫວ່າງ ກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສາທາລະນະລັດ ສັງຄົມນິຍົມຫວຽດນາມ ວ່າດ້ວຍການໃຫ້ບູລິມະສິດ ອັດຕາພາສີນຳເຂົ້າ-ສົ່ງອອກ ລາວ-ຫວຽດນາມ.

ກະຊວງອຸດສາຫະກຳ ແລະ ການຄ້າ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ສາທາລະນະລັດ ສັງຄົມນິຍົມຫວຽດນາມ (ຊຶ່ງຕໍ່ໄປນີ້ ເອີ້ນຫຍໍ້ວ່າ ຄູ່ສັນຍາ).

ເພື່ອປະຕິບັດຕາມ ສັນຍາວ່າດ້ວຍການຮ່ວມມື ດ້ານເສດຖະກິດ, ວັດທະນະທຳ, ວິທະຍາສາດ ແລະ ເຕັກນິກ ທີ່ໄດ້ລົງນາມຮ່ວມກັນໃນວັນທີ 10 ມັງກອນ 2008 ລະຫວ່າງ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ.

ຕາມທີ່ໄດ້ຕົກລົງດັດແກ້ ແລະ ເພີ່ມເຕີມໃສ່ຂໍ້ຕົກລົງ ລະຫວ່າງ ກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສາທາລະນະລັດ ສັງຄົມນິຍົມຫວຽດນາມ ຕໍ່ກັບບັນດາສິນຄ້າທີ່ໄດ້ຮັບບູລິມະສິດອັດຕາພາສີນຳເຂົ້າ ລາວ-ຫວຽດນາມ ໄດ້ລົງນາມໃນວັນທີ 28 ກໍລະກົດ 2005 (ຊຶ່ງຕໍ່ໄປນີ້ ເອີ້ນຫຍໍ້ວ່າ ຂໍ້ຕົກລົງ ທີ່ລົງນາມ ໃນວັນທີ 28 ກໍລະກົດ 2005) ດັ່ງລຸ່ມນີ້:

### *ມາດຕາ 1:*

ເພີ່ມເຕີມມາດຕາ 6 ຂອງຂໍ້ຕົກລົງທີ່ລົງນາມໃນວັນທີ 28 ກໍລະກົດ 2005 ລາຍລະອຽດ ດັ່ງນີ້:

1. ໂກຕາປີ 2009 ຕໍ່ກັບບັນດາສິນຄ້າປະເພດໃບຢາສູບ ແລະ ກ້ານໃບຢາສູບ ທີ່ມີແຫຼ່ງກຳເນີດຈາກ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເມື່ອນຳເຂົ້າ ສາທາລະນະລັດ ສັງຄົມນິຍົມຫວຽດນາມ ແມ່ນໄດ້ຮັບບູລິມະສິດອັດຕາພາສີນຳເຂົ້າ ເທົ່າກັບ 0% ຈຳນວນ 3,000 ໂຕນ. ບັນດາລາຍການສິນຄ້າ ໃບຢາສູບ ແລະ ກ້ານຢາສູບທີ່ຈະໄດ້ຮັບບູລິມະສິດລວມມີ:
   - ໃບຢາສູບ Viginia ທີ່ອົບດ້ວຍອາຍຮ້ອນແລ້ວ ແຕ່ບໍ່ໄດ້ເອົາກ້ານອອກ
     (ເລກລະຫັດພາສີ: HS 2401.10.10.00)
   - ໃບຢາສູບ Virginia ທີ່ບໍ່ໄດ້ອົບດ້ວຍອາຍຮ້ອນ ແລະ ບໍ່ໄດ້ເອົາກ້ານອອກ
     (ເລກລະຫັດພາສີ: HS 2401.10.20.00)
   - ໃບຢາສູບອື່ນໆ ທີ່ອົບດ້ວຍອາຍຮ້ອນແລ້ວ ແລະ ບໍ່ໄດ້ເອົາກ້ານອອກ
     (ເລກລະຫັດພາສີ: HS 2401.10.30.00)
   - ໃບຢາສູບອື່ນໆ ທີ່ບໍ່ໄດ້ອົບດ້ວຍອາຍຮ້ອນ ແລະ ບໍ່ໄດ້ເອົາກ້ານອອກ

(ເລກລະຫັດພາສີ: HS 2401.10.90.00)

- ໃບຢາສູບ Viginia ທີ່ອົບດ້ວຍອາຍຮ້ອນແລ້ວ ແລະ ເອົາກ້ານອອກບາງສ່ວນ ຫຼື ທັງໝົດ (ເລກລະຫັດພາສີ: HS 2401.20.10.00)
- ໃບຢາສູບ Burley ທີ່ເອົາກ້ານອອກບາງສ່ວນ ຫຼື ທັງໝົດ (ເລກລະຫັດພາສີ: HS 2401.20.40.00)
- ກ້ານໃບຢາສູບ (ເລກລະຫັດພາສີ: HS 2401.30.10.00)

2. ໃນກາງປີ 2009 ຕໍ່ກັບສິນຄ້າປະເພດເຂົ້າກິນ ທີ່ມີແຫຼ່ງກຳເນີດຈາກ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເມື່ອນຳເຂົ້າ ສາທາລະນະລັດ ສັງຄົມນິຍົມຫວຽດນາມ ແມ່ນໄດ້ຮັບບູລິມະສິດອັດຕາພາສີ ນຳເຂົ້າ ເທົ່າກັບ 0% ຈຳນວນ 40,000 ໂຕນ. ຄິດໄລ່ເປັນເຂົ້າສານ ຕາມອັດຕາສ່ວນເຂົ້າເປືອກ 2 Kg ຕໍ່ກັບ ເຂົ້າສານ 1.2 Kg. ບັນດາລາຍການສິນຄ້າປະເພດເຂົ້າກິນ ທີ່ໄດ້ຮັບບູລິມະສິດ ລວມມີ :

- ເຂົ້າເປືອກ (ເລກລະຫັດພາສີ: HS 1006.10.00.90)
- ເຂົ້າສານຫອມອື່ນໆ ທີ່ສີແລ້ວ ຫຼື ຍັງບໍ່ທັນສີແລ້ວ, ທີ່ຂັດເງົາ ຫຼື ຍັງບໍ່ຂັດເງົາ (ເລກລະຫັດພາສີ: 1006.30.19.00)
- ເຂົ້າສານໜຽວທີ່ສີແລ້ວ ຫຼື ຍັງບໍ່ທັນສີແລ້ວ, ທີ່ຂັດເງົາ ຫຼື ຍັງບໍ່ຂັດເງົາ (ເລກລະຫັດພາສີ: HS 1006.30.30.00)
- ເຂົ້າສານອື່ນໆ ທີ່ສີແລ້ວ ຫຼື ຍັງບໍ່ທັນສີແລ້ວ, ທີ່ຂັດເງົາ ຫຼື ຍັງບໍ່ຂັດເງົາ (ເລກລະຫັດພາສີ: HS 1006.30.90.00)

*ມາດຕາ 2:*

ໃນກາງປີ 2009 ສຳລັບບັນດາສິນຄ້າລົດບັນທຸກທີ່ມີຂະໜາດບໍ່ເກີນ 5 ໂຕນ ໃນສາລະບານ 4 (ລະຫັດເລກທີ HS 8704.21) ທີ່ມີແຫຼ່ງກຳເນີດຈາກ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ເມື່ອນຳເຂົ້າ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນໄດ້ຮັບບູລິມະສິດຫຼຸດຜ່ອນ 50% ອັດຕາພາສີນຳເຂົ້າ CEPT/AFTA ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນທັງສອງຝ່າຍຈະໄດ້ ປຶກສາຫາລືນຳກັນ ແລະ ລົງນາມການພາຍຫຼັງ.

*ມາດຕາ 3:*

ສາລະບານ 1a ຄັດຕິດມາພ້ອມກັບຂໍ້ຕົກລົງສະບັບນີ້ ປ່ຽນແທນ ສາລະບານ 1a ປະຈຸບັນ.
ສາລະບານ 1b ຄັດຕິດມາພ້ອມກັບຂໍ້ຕົກລົງສະບັບນີ້ ປ່ຽນແທນ ສາລະບານ 1b ປະຈຸບັນ.

*ມາດຕາ 4:*

ໃນກໍລະນີຄູ່ສັນຍາຝ່າຍໃດ ປ່ຽນແປງລະຫັດພາສີ (HS) ໃນສາລະບານພາສີນຳເຂົ້າ ຕໍ່ກັບບັນດາສິນຄ້າ ໄດ້ລະບຸໄວ້ຕາມຂໍ້ຕົກລົງສະບັບນີ້, ຄູ່ສັນຍາຝ່າຍນັ້ນ ມີໜ້າທີ່ແຈ້ງໃຫ້ຄູ່ສັນຍາອີກຝ່າຍໜຶ່ງພາຍໃນ 30

ວັນ ນັບຕັ້ງແຕ່ວັນທີ່ປະກາດໃຊ້ແຈ້ງການ ກ່ຽວກັບການປຸງແປງ ແລະ ປະສານສົມທົບຈັດຕັ້ງປະຕິບັດ ປັບປຸງລະຫັດພາສີ (HS) ຕາມຫຼັກການທຸງເທົ່າ.

*ມາດຕາ 5:*

1. ການນຳເຂົ້າສິນຄ້າປະເພດໄຂ່ສົດປີກ (ບັນດາເລກລະຫັດພາສີ: HS 0407.00.91, 0407.00.92, 0407.00.99), ເກືອ (ເລກລະຫັດພາສີ: HS 2501), ນ້ຳຕານສຳເລັດຮູບ, ນ້ຳຕານດິບ (ເລກລະຫັດພາສີ: HS 1701) ທີ່ມີແຫຼ່ງກຳເນີດຈາກ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເມື່ອນຳເຂົ້າ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ໃຫ້ປະຕິບັດດັ່ງນີ້:

1.1 ກໍລະນີຈຳນວນນຳເຂົ້າ ນອນໃນຈຳນວນໂກຕານຳເຂົ້າລວມປີ 2009 ແລະ ຖືກຕ້ອງກັບ ບັນດາເງື່ອນໄຂທີ່ໄດ້ກຳນົດໃນບັນດານິຕິກຳ ທີ່ມີຜົນບັງຄັບໃຊ້ໃນປະຈຸບັນຂອງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ກ່ຽວກັບໂກຕາ ແມ່ນນຳໃຊ້ບູລິມະສິດອັດຕາພາສີນຳເຂົ້າພິເສດ ຕາມຂໍ້ຕົກລົງສະບັບນີ້.

1.2 ກໍລະນີຈຳນວນນຳເຂົ້າ ຫາກເກີນຈຳນວນໂກຕານຳເຂົ້າລວມປີ 2009 ຫຼື ບໍ່ຖືກຕ້ອງກັບ ບັນດາເງື່ອນໄຂທີ່ໄດ້ກຳນົດໄວ້ໃນນິຕິກຳ ທີ່ມີຜົນບັງຄັບໃຊ້ໃນປະຈຸບັນ ຂອງສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ກ່ຽວກັບໂກຕາທີ່ເກີນ ແມ່ນຕ້ອງປະຕິບັດຕາມອັດຕາພາສີນຳເຂົ້ານອກໂກຕາ ທີ່ໄດ້ລະບຸໄວ້ໃນນິຕິກຳ ທີ່ມີຜົນບັງຄັບໃຊ້ໃນປະຈຸບັນຂອງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ.

2. ການນຳເຂົ້າສິນຄ້າປະເພດໃບຢາສູບ ແລະ ກ້ານຢາສູບ ທີ່ລະບຸໃນຂໍ້ 1 ມາດຕາ1 ຂອງຂໍ້ຕົກລົງສະບັບນີ້ ແມ່ນປະຕິບັດດັ່ງນີ້:

2.1 ກໍລະນີຈຳນວນນຳເຂົ້າ ນອນໃນຈຳນວນນຳເຂົ້າທີ່ໄດ້ລະບຸໃນຂໍ້ 1 ມາດຕາ 1 ຂອງຂໍ້ຕົກລົງສະບັບນີ້ ແມ່ນໄດ້ຮັບບູລິມະສິດອັດຕາພາສີນຳເຂົ້າ-ສົ່ງອອກພິເສດ ຕາມທີ່ໄດ້ລະບຸໃນ ຂໍ້ 1 ມາດຕາ 1 ຂອງຂໍ້ຕົກລົງສະບັບນີ້

2.2 ກໍລະນີຈຳນວນນຳເຂົ້າ ເກີນຈຳນວນນຳເຂົ້າທີ່ໄດ້ລະບຸໄວ້ໃນຂໍ້ 1 ມາດຕາ 1 ຂອງຂໍ້ຕົກລົງສະບັບນີ້ ແຕ່ຍັງນອນໃນຈຳນວນໂກຕານຳເຂົ້າລວມ ປີ 2009 ແລະ ຖືກຕ້ອງກັບບັນດາເງື່ອນໄຂທີ່ໄດ້ລະບຸໃນນິຕິກຳ ທີ່ມີຜົນບັງຄັບໃຊ້ໃນປະຈຸບັນຂອງ ສາທາລະນະລັດ ສັງຄົມ ນິຍົມ ຫວຽດນາມ ກ່ຽວກັບໂກຕາ ແມ່ນໄດ້ຮັບບູລິມາສິດອັດຕາພາສີນຳເຂົ້າໃນປະຈຸບັນ ຂອງສາທາລະນະລັດ ສັງຄົມນິຍົມ ຫວຽດນາມ.

2.3 ກໍລະນີຈຳນວນນຳເຂົ້າ ເກີນຈຳນວນນຳເຂົ້າທີ່ໄດ້ລະບຸໄວ້ໃນ ຂໍ້ 1 ມາດຕາ 1 ຂອງຂໍ້ຕົກລົງສະບັບນີ້ ແລະ ເກີນຈຳນວນໂກຕາທັງໝົດຂອງປີ 2009 ຫລື ບໍ່ຖືກຕ້ອງກັບເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນນິຕິກຳ ທີ່ມີຜົນບັງຄັບໃຊ້ໃນປະຈຸບັນ ຂອງສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ກ່ຽວກັບໂກຕາສ່ວນເກີນ ແມ່ນປະຕິບັດຕາມຕາມອັດຕາພາສີນຳເຂົ້ານອກໂກຕາທີ່ໄດ້ລະບຸໄວ້ໃນບັນດານິຕິກຳ ທີ່ມີຜົນບັງຄັບໃຊ້ໃນປະຈຸບັນຂອງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ.

*ມາດຕາ 6:*

ບັນດາບູລິມະສິດອັດຕາພາສີໃນຂໍ້ຕົກລົງສະບັບນີ້ມີຜົນສັກສິດຕັ້ງແຕ່ ວັນທີ 01 ມັງກອນ 2009 ຮອດວັນທີ 31 ທັນວາ 2009. ໃນໄລຍະເວລາ 90 ວັນ ກ່ອນຂໍ້ຕົກລົງສະບັບນີ້ຈະສິ້ນສຸດການມີຜົນບັງຄັບໃຊ້, ຖ້າບໍ່ມີຄູ່ສັນຍາຝ່າຍໃດຝ່າຍໜຶ່ງ ສະເໜີເປັນລາຍລັກອັກສອນກ່ຽວກັບການດັດແກ້, ເພີ່ມເຕີມ ຫລື ຍົກເລີກ ຂໍ້ຕົກລົງສະບັບນີ້, ຂໍ້ຕົກລົງສະບັບນີ້ຈະສືບຕໍ່ນຳໃຊ້ຕື່ມອີກໜຶ່ງປີໂດຍອັດຕະໂນມັດ. ໃນປີຕໍ່ໄປ, ຈະໄດ້ສືບຕໍ່ຈັດຕັ້ງປະຕິບັດການຕໍ່ອາຍຸຄືກັນນີ້.

*ມາດຕາ 7:*

ໃນໄລຍະເວລາບໍ່ເກີນ 30 ວັນ ນັບຕັ້ງແຕ່ວັນທີ່ລົງນາມໃນຂໍ້ຕົກລົງສະບັບນີ້, ກະຊວງອຸດສາຫະກຳ ແລະ ການຄ້າ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ມີໜ້າທີ່ລາຍງານທ່ານນາຍົກລັດຖະມົນຕີຂອງຕົນ ພິຈາລະນາ, ອະນຸມັດບັນດາເນື້ອໃນຂອງຂໍ້ຕົກລົງສະບັບນີ້.

ເຮັດຂຶ້ນທີ່ນະຄອນຫຼວງວຽງຈັນ, ວັນທີ 17 ເດືອນ ມັງກອນ ປີ 2009 ເປັນສອງສະບັບ, ແຕ່ລະສະບັບ ເປັນພາສາລາວ ແລະ ພາສາຫວຽດ. ແຕ່ລະຝ່າຍຮັກສາໄວ້ 01 ສະບັບ.

| | |
|---|---|
| ລັດຖະມົນຕີວ່າການ | ລັດຖະມົນຕີວ່າການ |
| ກະຊວງອຸດສາຫະກຳ ແລະ ການຄ້າ | ກະຊວງອຸດສາຫະກຳ ແລະ ການຄ້າ |
| ແຫ່ງ ສປປ ລາວ | ແຫ່ງ ສສ ຫວຽດນາມ |
| ດຣ. ນາມ ວິຍະເກດ | ດຣ. ຫວູ ຮຸຍ ຮວາງ |

ສາລະບານ 1a: ບັນຊີສິນຄ້າທີ່ໄດ້ຮັບບູລິມະສິດຫຼຸດຜ່ອນ 50 % ອັດຕາພາສີຂາເຂົ້າ
ຂອງລາວ ຕາມການຕົກລົງ ຂອງໂຄງການໃຫ້ບູລິມະສິດ ລາວ-ຫວຽດນາມ
(ເອີ້ນຫຍໍ້ວ່າ: ບັນຊີຫຼຸດພາສີ 50%)

**Annex Ia: LIST OF GOODS ENJOYING A 50% TARIFF REDUCTION**

**PURSUANT TO LAO - VIET PREFERENTIAL PROGRAM**

**(In short: 50% Tariff Reduction List)**

26 Items

| ລ/ດ No | ລະຫັດ HS HS code | ລາຍການສິນຄ້າ | Description of Goods | ອັດຕາພາສີ MFN MFN tariff | ອັດຕາພາສີ CEPT CEPT rate | | ອັດຕາພາສີບູລິມະສິດ ລາວ- ຫວຽດນາມ Lao-Viet Preferential Tariff | |
|---|---|---|---|---|---|---|---|---|
| | | | | | 2009 | 2010 | 2009 | 2010 |
| | | ສັດມີຊີວິດອື່ນໆ | Other live animals. | | | | | |
| | | - ສັດເລືອດອຸ່ນທີ່ລ້ຽງລູກດ້ວຍນົມ : | - Mammals: | | | | | |
| 1 | 0106.19.00 | - - ອື່ນໆ | - - Other | 10 | 7 | 7 | 3.5 | 3.5 |
| 2 | 0106.20.00 | - ສັດເລືອຄານ ( ລວມທັງ ຈຳພວກງູ ແລະເຕົ່າ ) | - Reptiles (including snakes and turtles) | 10 | 7 | 7 | 3.5 | 3.5 |
| 3 | 0106.31.00 | - ນົກ: ນົກໃຊ້ກິນເປັນອາຫານ | - Birds: Birds of prey | 10 | 7 | 7 | 3.5 | 3.5 |
| 4 | 0106.32.00 | - - ນົກທີ່ມີຮູບຮ່າງງາມ(ລວມທັງນົກແກ້ວ,ນົກແກ້ວຫາງຍາວ,ນົກຍູງແລະນົກແກ້ວຂາວ) | - - Psittaciformes (including parrots, parakeets, macaws and cockatoos) | 10 | 7 | 7 | 3.5 | 3.5 |
| 5 | 0106.39.00 | - - ອື່ນໆ | -- Other | 10 | 7 | 7 | 3.5 | 3.5 |
| 6 | 0106.90.10 | - ອື່ນໆ: ສຳລັບມະນຸດບໍລິໂພກ | - Other: For human consumption | 10 | 7 | 7 | 3.5 | 3.5 |
| 7 | 0106.90.90 | - - ອື່ນໆ | - - Other | 10 | 7 | 7 | 3.5 | 3.5 |
| 8 | 0203.11.00 | ຊີ້ນສັດຈຳພວກໝູ ສົດ, ແຊ່ເຢັນ ຫລືແຊ່ແຂງ: ສົດ ຫລືແຊ່ເຢັນ: ທັງໂຕ ຫລືເຄິ່ງໂຕ. | Meat of swine, fresh, chilled or frozen: Fresh or chilled: Carcasses and half carcasses | 30 | 15 | 13 | 7.5 | 6.5 |
| 9 | 0203.12.00 | - - ຊີ້ນຂາ, ບ່າ ແລະສ່ວນຂອງຂາ ຫລືບ່າ ມີກະດູກ. | - - Hams, shoulders and cuts thereof, with bone in | 30 | 15 | 13 | 7.5 | 6.5 |
| 10 | 0203.19.00 | - - ສ່ວນອື່ນໆ. | - - Other | 30 | 15 | 13 | 7.5 | 6.5 |
| 11 | 0203.22.00 | - - ຊີ້ນຂາ, ບ່າ ແລະສ່ວນຂອງຂາ ຫລືບ່າ ມີກະດູກ. | - - Hams, shoulders and cuts thereof, with bone in | 30 | 15 | 13 | 7.5 | 6.5 |
| 12 | 0203.29.00 | - - ສ່ວນອື່ນໆ(ຊີ້ນໝູແຊ່ເຢັນ ຫລືແຊ່ແຂງ). | - - Other (Frozen meat of swine). | 30 | 15 | 13 | 7.5 | 6.5 |

| ລ/ດ No | ລະຫັດ HS HS code | ລາຍການສິນຄ້າ | Description of Goods | ອັດຕາພາສີ MFN MFN tariff | ອັດຕາພາສີ CEPT CEPT rate | | ອັດຕາພາສີບູລິມະສິດ ລາວ- ຫວຽດນາມ Lao-Viet Preferential Tariff | |
|---|---|---|---|---|---|---|---|---|
| | | | | | 2009 | 2010 | 2009 | 2010 |
| 13 | 0210.11.00 | ຊີ້ນ ແລະສ່ວນອື່ນທີ່ບໍລິໂພກໄດ້, ໃສ່ເກືອ ຫລືແຊ່ນ້ຳເກືອ, ແຫ້ງ, ຫລືຢ້າງຄວນໄຟ; ແປ້ງ ແລະ ແປ້ງລະອຽດ, ທີ່ບໍລິໂພກໄດ້ຂອງຊີ້ນ ຫລື ພາກສ່ວນອື່ນໆ: ຊີ້ນຈຳພວກ ໝູ: ຂາໝູ, ບ່າ ແລະສ່ວນຕັດ ມີກະດູກ | Meat and edible meat offal, salted, in brine, dried or smoked; edible flours and meals of meat or meat offal: Meat of swine: Hams, shoulders and cuts thereof, with bone in | 30 | 15 | 13 | 7.5 | 6.5 |
| 14 | 0210.12.00 | - - ໜ້າເອິກ ( ລະຫວ່າງໄຂມັນ ) ແລະສ່ວນຕັດຂອງສິ່ງດັ່ງກ່າວ. | - - Bellies (streaky) and cuts thereof | 30 | 15 | 13 | 7.5 | 6.5 |
| 15 | 0210.19.10 | ຊີ້ນ ແລະ ສ່ວນອື່ນຂອງສັດທີ່ບໍລິໂພກໄດ້, ເອືອນເກືອ, ແຊ່ນ້ຳເກືອ, ແຫ້ງ ຫຼືອົບຄວັນ; ຊີ້ນ ແລະ ສ່ວນອື່ນຂອງສັດທີ່ບົດເປັນແປ້ງ ຊຶ່ງສາມາດບໍລິໂພກໄດ້.<br>- ຊີ້ນໝູ:<br>- - ອື່ນໆ:<br>- - - ຊີ້ນກະດູກຂ້າງໝູເຄັມ | Meat and edible meat offal, salted, in brine, dried or smoked; edible flours and meals of meat and meat offal:<br>- Meat of swine:<br>- - Other:<br>- - - Bacon | 30 | 15 | 13 | 7.5 | 6.5 |
| 16 | 0210.19.20 | - - - ຂາຫຼັງ, ບໍ່ມີກະດູກ | - - - Ham, boneless | 30 | 15 | 13 | 7.5 | 6.5 |
| ·17 | 0210.19.90 | - - - ອື່ນໆ | - - - Other | 30 | 15 | 13 | 7.5 | 6.5 |
| 18 | 0210.91.00 | - ອື່ນໆ ລວມທັງຊີ້ນ ແລະສ່ວນອື່ນຂອງສັດທີ່ບົດເປັນແປ້ງ ເຊິ່ງສາມາດບໍລິໂພກໄດ້: ຂອງ ສັດລ້ຽງລູກດ້ວຍນົມຈຳພວກລີງ | - Meat and edible meat offal, salted, in brine, dried or smoked; edible: Other, including edible flours and meals of meat and meat offal: Of primates | 30 | 15 | 13 | 7.5 | 6.5 |
| 19 | 0210.92.00 | - - ຂອງ ປາວານ, ໂລມາ ແລະໂລມາ | - - Of whales, dolphins and porpoises (mammals of the order Cetacean); of manatees and dugongs (mammals of the order Sirenia) | 30 | 15 | 13 | 7.5 | 6.5 |
| 20 | 0210.93.00 | - - ຂອງສັດເລືອຄານ ( ລວມທັງຈຳພວກງູ ແລະເຕົ່າ ) | - - Of reptiles (including snakes and turtles) | 30 | 15 | 13 | 7.5 | 6.5 |
| 21 | 0210.99.10 | - - ອື່ນໆ:<br>- - - ໄກ່ແຫ້ງແຊ່ເຢັນ | - - Other:<br>- - - Freeze dried chicken dice | 30 | 15 | 13 | 7.5 | 6.5 |
| 22 | 0210.99.20 | - - - ໜັງໝູແຫ້ງ | - - - Dried pork skin | 30 | 15 | 13 | 7.5 | 6.5 |

| ລ/ດ No | ລະຫັດ HS HS code | ລາຍການສິນຄ້າ | Description of Goods | ອັດຕາພາສີ - MFN MFN tariff | ອັດຕາພາສີ CEPT CEPT rate | | ອັດຕາພາສີບູລິມະສິດ ລາວ- ຫວຽດນາມ Lao-Viet Preferential Tariff | |
|---|---|---|---|---|---|---|---|---|
| | | | | | 2009 | 2010 | 2009 | 2010 |
| 23 | 0210.99.90 | - - - ອື່ນໆ | - - Other | 30 | 15 | 13 | 7.5 | 6.5 |
| 24 | 2402.10.00 | - ຢາສູບຊີກາ (Cigars), ຢາສູບເຊີຣູດ (Cheroots), ຢາສູບຊີກາຣີລໂລສ (Cigarillos) ທີ່ມີຢາສູບ | - Cigars, cheroots and cigarillos, containing tobacco | 40 | 5 | 5 | 2.5 | 2.5 |
| 25 | 2402.20.10 | - ກອກຢາທີ່ມີໃບຢາສູບ: ບີດີ (Beedies) | - Cigarettes containing tobacco: Beedies | 40 | 5 | 5 | 2.5 | 2.5 |
| 26 | 2402.20.90 | - - ອື່ນໆ | - - Other | 40 | 5 | 5 | 2.5 | 2.5 |

ສາລະບານ 2 a: ບັນຊີສິນຄ້າ ທີ່ບໍ່ໄດ້ຮັບການຫລຸດ ອັດຕາພາສີ ຂາເຂົ້າ ຂອງ ລາວ ຕາມໂຄງການ ບູລິມະສິດ ລາວ - ຫວຽດນາມ (ເອີ້ນຫຍໍ້ວ່າ: ບັນຊີສະຫງວນໄວ້ຂອງລາວ)

**Annex 2a:** LIST OF GOODS EXEMPT FROM LAO'S TARIFF REDUCTION

PURSUANT TO LAO- VIET PREFERENTIAL PROGRAM

(In short: Lao Negative List)

19 March 2008 70 Items

| ລ/ດ No | ລະຫັດ HS HS Code | ລາຍການສິນຄ້າເປັນພາສາລາວ | English Description | ອັດຕາພາສີ MFN MFN Tariff 2008 |
|---|---|---|---|---|
| 1 | 0507.10 | ງາຊ້າງ, ເກັດຂອງເຕົ່າ, ຄັນຄີ່ງປາວານ (Fanon) ລວມທັງ ຫນວດຄາງ ຂອງປາວານ ຫລື ຂອງສັດທະເລທີ່ລ້ຽງລູກດ້ວຍນົມ, ເຂົາ, ເຂົາກວາງ, ກີບຕີນສັດ, ເລັບຕີນສັດ, ເລັບແຫຼມແລະ ສົບປີກ; ບໍ່ທັນຈັດແຕ່ງ ຫລືພຽງແຕ່ຈັດແຕ່ງໃນເບື້ອງຕົ້ນ, ແຕ່ບໍ່ໄດ້ຕັດເປັນຮູບຊົງ ; ຜົງ ແລະເສດຂອງວັດຖຸເຫລົ່ານີ້: ງາຊ້າງ; ຜົງ ແລະເສດຂອງງາຊ້າງ | Ivory and tortoise-shell, whalebone and whalebone hair, horns, antlers, hooves, nails, claws and beaks unworked or simply prepared but not cut to shape; powder and waste of these products: Ivory; ivory powder and waste. | 10 |
| 2 | 0507.90 | - ອື່ນໆ (ເກັດຂອງເຕົ່າ, ເຂົາກວາງ, ... .) | - Other. | 10 |
| 3 | 2203.00 | ເບຍຈາກມານ (Bieres de malt). | Beer made from malt. | 40 |
| 4 | 2204.10 | ເຫຼົ້າແວງຈາກອະງຸ່ນສົດ, ລວມທັງແວງເພີ່ມເຫລົ້າ;ນ້ຳອະງຸ່ນ (ມູ=Mouts) ທີ່ບໍ່ທັນຫມັກ, ນອກຈາກຈຳພວກທີ່ຢູ່ໃນ 20.09; ເຫຼົ້າແວງມູດເຊີ (Vins mousseux). | Wine of fresh grapes, including fortified wines; grapes must other than that of heading No. 20.09 : Sparkling wine. | 30 |
| 5 | 2204.21 | - ເຫຼົ້າແວງອື່ນໆ; ນ້ຳອະງຸ່ນທີ່ງການຫມັກກີດກັ້ນ ຫລືຖືກຢຸດດ້ວຍການຕື່ມເຫລົ້າໃສ່: ບັນຈຸໃນພາຊະນະ ບໍ່ເກີນ 2 ລິດ. | - Other wine; grape must with fermentation prevented or arrested by the addition of alcohol: In containers holding 2 or less. | 30 |
| 6 | 2204.29 | -- ອື່ນໆ | -- Other. | 30 |
| 7 | 2205.10 | ເຫຼົ້າແວມຸດ (Vermouth) ແລະເຫຼົ້າແວງອະງຸ່ນສົດອື່ນໆ ທີ່ປຸງແຕ່ງ ໂດຍອາໄສຕົ້ນໄມ້ ຫລືສານຫອມ: ບັນຈຸໃນພາຊະນະ ບໍ່ເກີນ 2 ລິດ | Vermouth and other wine of fresh grapes flavoured with plants or aromatic substances: In containers holding 2 l or less. | 30 |
| 8 | 2205.90 | - ອື່ນໆ | - Other grape must. | 30 |
| 9 | 2206.00 | ເຄື່ອງດື່ມອື່ນໆ ທີ່ໄດ້ຈາກການຫມັກ (ຊີດເຣີ = Cidre, ປົວເຣີ = Poire, ເປັນຕົ້ນ) | Other fermented beverages ( for example, cider, perry, mead ). | 30 |
| 10 | 2207.10 | ເຫລົ້າເອຕີລິກ (Ethylique), ບໍ່ໄດ້ປຸງແຕ່ງແບບຊາດມີຄວາມແຮງ ຂອງເຫລົ້າໂດຍປະລິມານ 80 % ຫລືກວ່ານັ້ນ; ເຫລົ້າເອຕີລິກ ແລະເຫລົ້າຂາວ (Eaux-de-vie) ປຸງແຕ່ງແບບຊາດ ແລ້ວຈະຢູ່ໃນຄວາມແຮງ ຂອງເຫລົ້າເທົ່າໃດກໍ່ຕາມ: ເຫລົ້າເອຕີລິກ ບໍ່ໄດ້ປຸງແຕ່ງແບບຊາດ ມີຄວາມແຮງຂອງເຫລົ້າ ໂດຍປະລິມານ 80 % ຂຶ້ນໄປ | Undenatured ethyl alcohol of an alcoholic strength by volume of 80% vol or higher; ethyl alcohol and other spirits, denatured, of any strength : Alcoholic strength by volume of 80% vol or higher. | 30 |
| 11 | 2207.20 | - ເຫລົ້າເອຕີລິກ ແລະເຫລົ້າຂາວ ປຸງແຕ່ງແບບຊາດແລ້ວ ຈະຢູ່ໃນຄວາມແຮງ ຂອງເຫລົ້າເທົ່າໃດກໍ່ຕາມ | - Ethyl alcoholic and other spirits, denatured , of any strength . | 40 |

| ລ/ດ No | ລະຫັດ HS HS Code | ລາຍການສິນຄ້າເປັນພາສາລາວ | English Description | ອັດຕາພາສີ MFN MFN Tariff 2008 |
| --- | --- | --- | --- | --- |
| 12 | 2208.10 | ເຫຼົ້າເອຕິລິກ ບໍ່ໄດ້ປຸງແຕ່ງແປງສະພາບ ທີ່ມີຄວາມແຮງຂອງເຫຼົ້າ ໂດຍປະລິມານຕ່ຳກວ່າ 80 % ໂວນ (Vol) ; ເຫຼົ້າ, ເຫຼົ້າຫວານ,ເຫຼົ້າ ແລະເຄື່ອງດື່ມອື່ນໆ ທີ່ມີເຫຼົ້າ; ການປຸງແຕ່ງມີເຫຼົ້າປະສົມປະເພດໃຊ້ໃນການຜະລິດເຄື່ອງດື່ມ; ການປຸງແຕ່ງມີເຫຼົ້າປະສົມປະເພດໃຊ້ໃນການຜະລິດເຄື່ອງດື່ມ | Undenatured ethyl alcohol of an alcoholic strength by volumeof less than 80% vol; spirits, liqueurs and other spirituous beverages; compound alcoholic preparations of a kind used for the manufacture of beverages: Compound alcoholic preparations of a kind used for the manufacture of beverages. | 30 |
| 13 | 2208.20 | - ໂອເດີວີຂອງແວງ ຫຼື ເສດເຫຼືອຂອງລະຫຸ່ນ | - Spirits obtained by distilling grape wine or grape marc. | 30 |
| 14 | 2208.30 | - ວິສກີ (Whiskies) | - Whiskies. | 40 |
| 15 | 2208.40 | - ຣົມ ແລະຕາເຟຍ (Rhum et tafia) | - Rum and tafia. | 40 |
| 16 | 2208.50 | - ຈິນ ແລະເຈີນີແອວເຣີ (Gin et geniere) | - Gin and Geneva. | 40 |
| 17 | 2208.90 | - ອື່ນໆ | - Other. | 40 |
| 18 | 2939.19.00 | - - ອື່ນໆ | - - Other | 5 |
| 19 | 3601.00 | ໝື້ລະເບີດດັນສົ່ງ. | | 10 |
| 20 | 3602.00 | ສິ່ງລະເບີດປຸງແຕ່ງແລ້ວ, ທີ່ບໍ່ແມ່ນໝື້ດັນສົ່ງ. | Prepared explosives, other than propellent powders. | 10 |
| 21 | 3603.00 | ຊະນວນປົອດໄພ, ຊະນວນລະເບີດ; ຊະນວນ ແລະກ່ອງລະເບີດ; ເຄື່ອງຈູດໄຕ້; ເຄື່ອງຈູດລະເບີດຊະນິດໄຟຟ້າ | Safety fuses; detonating fuses; percussion or detonating caps; igniters; electric detonators | 10 |
| 22 | 3604.10 | ຜະລິດຕະພັນສຳລັບບັ້ງໄຟດອກ | Fireworks | 20 |
| 23 | 3604.90 | - ອື່ນໆ. | - Other. | 20 |
| 24 | 8401.00 | ເຄື່ອງປະຕິກອນປະລາມະນູ; ອົງປະກອບເຊື້ອໄຟ (ລູກປືນ) ທີ່ບໍ່ໄດ້ໃຊ້ສຳລັບເຄື່ອງປະລາມະນູ; ເຄື່ອງຈັກ ແລະເຄື່ອງໃຊ້ກົນ ສຳລັບແຍກອີໂຊໂຕບປີກ (Aeparation Isotopique). | Nuclear reactors; fuel elements ( cartridges ), non-irradiated, for nuclear reactors; machinery and apparatus for isotopic separation. | 5 |
| 25 | 8703.21 | ລົດຍົນໃຊ້ທ່ອງທ່ຽວ ແລະຍານພາຫະນະອື່ນໆ ທີ່ສ້າງຂຶ້ນເພື່ອຂົນສົ່ງ ຄົນເປັນຕົ້ນຕໍ (ນອກຈາກທີ່ບົ່ງໄວ້ 87.02) ລວມທັງ ຍານພາຫະນະຊະນິດ " ເບຣກ - Break " ແລະ " ລົດແຂ່ງ ": ຍານພາຫະນະອື່ນໆ ທີ່ມີຈັກ ແບບແລ່ນສຳລັບຈູດໄວ້ດ້ວຍປະກາຍໄຟ : ທີ່ມີລູກສູບຂະໜາດບໍ່ເກີນ 1.000 ຊມ³ | Motor cars and other motor vehicles principally designed for the transport of persons ( other than those of heading No. 87.02 ), including station wagons and racing cars : Other vehicles, with spark - ignition internal combustion reciprocating piston engine: Of a cylinder capacity not exceeding 1,000 cc. | 40 |
| 26 | 8703.22 | -- ທີ່ລູກສູບຂະໜາດເກີນກ່ວາ 1.000 ຊມ³ ແຕ່ບໍ່ເກີນ 1.500 ຊມ³ | -- Of a cylinder capacity exceeding 1,000 cc but not exceeding 1,500 cc. | 40 |
| 27 | 8703.23 | -- ທີ່ລູກສູບຂະໜາດເກີນກ່ວາ 1.500 ຊມ³ ແຕ່ບໍ່ເກີນ 3.000 ຊມ³ | -- Of a cylinder capacity exceeding 1,500 cc but not exceeding 3,000 cc. | 40 |
| 28 | 8703.24 | -- ທີ່ລູກສູບຂະໜາດເກີນກ່ວາ 3.000 ຊມ³. | -- Of a cylinder capacity exceeding 3,000 cc. | 40 |
| 29 | 8703.31 | - ຍານພາຫະນະອື່ນ, ທີ່ມີຫົວຈັກຈູດໄຕ້ດ້ວຍການອັດ (ດີເຊລ ຫຼື ເຄິ່ງດີເຊລ): ທີ່ມີລູກສູບຂະໜາດບໍ່ເກີນ 1.500 ຊມ³ | - Other vehicles, with compression-ignition internal combustion piston engine ( diesel or semi - diesel ): Of a cylinder capacity not exceeding 1,500 cc. | 40 |
| 30 | 8703.32 | -- ທີ່ລູກສູບຂະໜາດເກີນກ່ວາ 1.500 ຊມ³ ແຕ່ບໍ່ເກີນ 3.000 ຊມ³ | -- Of a cylinder capacity exceeding 1,500 cc but not exceeding 3,000 cc | 40 |

| ລ/ດ<br>No | ລະຫັດ HS<br>HS Code | ລາຍການສິນຄ້າເປັນພາສາລາວ | English Description | ອັດຕາພາສີ MFN<br>MFN Tariff 2008 |
|---|---|---|---|---|
| 31 | 8703.33 | -- ທີ່ລູກສູບຂະໜາດເກີນກ່ວາ 3.000 ຊມ³ ຂຶ້ນໄປ. | -- Of a cylinder capacity exceeding 3,000 cc. | 40 |
| 32 | 8703.34 | -- ລົດຈີບທຸກປະເພດ | -- Cars of jeep type with either flexible or hard top including station - wagons type, and similar vehicles. | 40 |
| 33 | 8703.90 | - ອື່ນໆ. | - Other. | 40 |
| 34 | 8704.31 | - ອື່ນໆ ທີ່ມີຈັກຈຸດໄຟດ້ວຍປະກາຍໄຟ; ທີ່ບັນຈຸນ້ຳໜັກສູງສຸດໄດ້ບໍ່ເກີນ 5 ໂຕນ. | - Other, with spark-ignition internal combustion piston engine : Not exceeding 5 tonnes. | 30 |
| 35 | 8706.10 | ຮ່າງ (Chassis) ຍານພາຫະນະໃນ 87.01 ເຖິງ 87.05 ທີ່ປະກອບຈັກແລ້ວ: ຂອງຍານພາຫະນະໃນ 87.03 | Chassis fitted with engines, for the motor vehicles of heading Nos. 87.01 to 87.05: For the vehicles of heading No. 87.03. | 40 |
| 36 | 8707.10 | ຕົວຖັງ (Carrosseries) ຂອງຍານຍົນ ໃນ 87.01 ເຖິງ 87.05 ລວມທັງກາບີນ (C120ຫ້ອງຂັບ): ຂອງຍານພາຫະນະໃນ 87.03. | Bodies ( including cabs ), for the motor vehicles of heading Nos. 87.01 to 87.05 :- For the vehicles of heading No. 87.03. | 40 |
| 37 | 8710.00 | ລົດຮົບ (Chars) ແລະລົດຫຸ້ມເກາະສຳລັບສົງຄາມຈະປະກອບອາວຸດ ຫຼືບໍ່ກໍ່ຕາມ, ສິ້ນສ່ວນຂອງສິ່ງດັ່ງກ່າວ. | Tanks and other armoured fighting vehicles, motorised, whether or not fitted with weapons, and parts of such vehicles. | 10 |
| 38 | 8801.10 | ບານລູນ (Ballons) ແລະຍານພາຫະອາກາດທີ່ຂັບໄດ້; ເຄື່ອງເຫີນ (Planeurs); ເຄື່ອງປີກຮູບເດນຕາ (Ailes delta) ແລະຍານອະວະກາດອື່ນໆ ທີ່ບໍ່ໄດ້ຄິດສ້າງຂຶ້ນເພື່ອປະກອບຈັກເປັນແຮງດັນ: ເຄື່ອງເຫີນ ແລະເຄື່ອງປີກຮູບເດນຕາ. | Balloons and dirigibles; gliders, hang gliders and other non - powered aircraft: Gliders and hang gliders. | 10 |
| 39 | 8801.90 | - ອື່ນໆ. | - Other. | 10 |
| 40 | 8802.10 | ຍານອາກາດອື່ນໆ (ເຮລິຄອບແຕ = Helicopteres, ເຮືອບິນ, ເປັນຕົ້ນ); ຍານອະວະກາດ (ລວມທັງດາວທຽມ) ແລະຈະຫຼວດຍິງສົ່ງຂອງ (Vehicules Lanceurs) ສິ່ງດັ່ງກ່າວ: ເຮລິຄອບແຕ. | Other aircraft ( for example, helicopters, aeroplanes ); spacecraft ( including satellites ) and spacecraft launch vehicles : Helicopters. | 10 |
| 41 | 8802.20 | - ເຮືອບິນ ແລະຍານອະວະກາດອື່ນ, ທີ່ມີນ້ຳໜັກບໍ່ເກີນ 2.000 ກລ ຕົວເປົ່າ | - Aeroplanes and other aircraft, of an unladen weight not exceeding 2,000 kg. | 10 |
| 42 | 8802.30 | - ເຮືອບິນ ແລະຍານອະວະກາດອື່ນ, ທີ່ມີນ້ຳໜັກຕົວເປົ່າເກີນ 2.000 ກລ ແຕ່ບໍ່ເກີນ 15.000 ກລ. | - Aeroplanes and other aircraft, of an unladen weight exceeding 2,000 kg but not exceeding 15,000 kg. | 10 |
| 43 | 8802.40 | - ເຮືອບິນ ແລະຍານອະວະກາດອື່ນ, ທີ່ມີນ້ຳໜັກຕົວເປົ່າເກີນ 15.000 ກລ | - Aeroplanes and other aircraft, of an unladen weight exceeding 15,000 kg. | 10 |
| 44 | 8802.50 | - ຍານອະວະກາດ (ລວມທັງດາວທຽມ) ແລະຈະຫຼວດຍິງສົ່ງ ຂອງສິ່ງດັ່ງກ່າວ | - Spacecraft ( including satellites ) and spacecraft launch vehicles. | 10 |
| 45 | 8803.10 | ສິ້ນສ່ວນຂອງເຄື່ອງໃຊ້ອຸປະກອນໃນ 88.01 ຫຼື 88.02: ໃບພັດ ແລະຕົວປັ່ນ ແລະສິ້ນສ່ວນຂອງສິ່ງດັ່ງກ່າວ | Parts of goods of heading No. 88.01 or 88.02: Propellers and rotors and parts thereof. | 10 |
| 46 | 8803.20 | - ງານຈອດ (Trains d'atterissages) ແລະສິ້ນສ່ວນຂອງສິ່ງດັ່ງກ່າວ. | - Under - carriages and parts thereof. | 10 |
| 47 | 8803.30 | - ສິ້ນສ່ວນອື່ນໆ ຂອງເຮືອບິນ ແລະເຮລິຄອບແຕ. | - Other parts of aeroplanes or helicopters. | 10 |
| 48 | 8803.90 | - ອື່ນໆ | - Other. | 10 |

| ລ/ດ No | ລະຫັດ HS HS Code | ລາຍການສິນຄ້າເປັນພາສາລາວ | English Description | ອັດຕາພາສີ MFN MFN Tariff 2008 |
|---|---|---|---|---|
| 49 | 8805.10 | ເຄື່ອງອຸປະກອນ ແລະ ເຄື່ອງປະກອບ ສຳລັບການສົ່ງຍານອາກາດ,ເຄື່ອງອຸປະກອນກົນ ແລະເຄື່ອງປະກອບສຳລັບວາງ ຍານອາກາດ ເທິງເສັ້ນທາງ ແລະເຄື່ອງອຸປະກອນກົນ ແລະ ເຄື່ອງປະກອບຄ້າຍຄຶງ; ເຄື່ອງອຸປະກອນສຳລັບພື້ນດິນ ເພື່ອເຝິກຊ້ອມການບິນ, ສິ້ນສ່ວນຂອງສິ່ງດັ່ງກ່າວ: ເຄື່ອງອຸປະກອນ ແລະເຄື່ອງປະກອບ ສຳລັບການສົ່ງຍານອາກາດ, ເຄື່ອງອຸປະກອນກົນ ແລະເຄື່ອງປະກອບສຳລັບວາງຍານອາກາດ ເທິງເສັ້ນທາງ ແລະເຄື່ອງອຸປະກອນກົນ ແລະເຄື່ອງປະກອບ ຄ້າຍຄຶງ ແລະສິ້ນສ່ວນຂອງສິ່ງດັ່ງກ່າວ. | Aircraft launching gear; deck-arrestor or similar gear; ground flying trainers; parts of the foregoing articles : Aircraft lanching gear and parts thereof; deck-arrestor or similar gear and parts thereof. | 10 |
| 50 | 8805.20 | - ເຄື່ອງອຸປະກອນກົນພື້ນດິນ ສຳລັບເຝິກຊ້ອມການບິນ ແລະສິ້ນສ່ວນຂອງສິ່ງດັ່ງກ່າວ. | - Ground flying trainers and parts thereof. | 10 |
| 51 | 9301.00 | ອາວຸດທີ່ໃຊ້ທາງການທະຫານ, ນອກຈາກປືນສັ້ນຣີໂວລເວີ້ (Revolvers), ປືນພົກໄຕ (Pistols) ແລະອາວຸດ | Military weapons, other than revolvers, pistols and the arms | 30 |
| 52 | 9302.00 | ປືນເຣໂວນແວ ແລະປືນປັດໂຕເລ, ນອກຈາກປືນທີ່ໄດ້ບົ່ງໄວ້ໃນ 93.03 ແລະ 93.04 | Revolvers and pistols, other than those of heading No. 93.03 or 93.04. | 30 |
| 53 | 9303.10. | ປືນແກັບ | Muzzle-loading firearms: | 30 |
| 54 | 9303.20 | - ປືນລູກຊອງອື່ນໆ ທີ່ໃຊ້ໃນການກິລາ, ການລ່າສັດ ຫຼື ການຍິງເປົ້າລວມທັງປືນທີ່ເປັນທັງປືນລູກຊອງ ແລະ ປືນເລັກຍາວ | - Other sporting, hunting or target-shooting shotguns, including combination shotgun-rifles | 30 |
| 55 | 9303.30 | ອື່ນໆ | Other | 30 |
| 56 | 9303.90 | - ອື່ນໆ | - Other | 30 |
| 57 | 9304.00 | ອາວຸດອື່ນໆ (ເຊັ່ນ: ປືນ ແລະ ປືນສັ້ນຊະນິດທີ່ໃຊ້ສະປຣິງ, ໃຊ້ລົມ ຫຼືໃຊ້ ແກັສ, ຄ້ອນຕຳຫຼວດ) ບໍ່ລວມເຖິງປະເພດທີ່ໄດ້ລະບຸໄວ້ໃນລະຫັດເລກ 93.07 | Other arms (for example, spring, air or gas guns and pistols, truncheons), excluding those of heading 93.07 | 30 |
| 58 | 9305.10 | ຂອງປືນເຣໂວເວີ້ (Revolvers) ຫຼື ປືນພົກໄຕ (Pistols) | Of revolvers or pistols | 30 |
| 59 | 9305.21 | ເລົາປືນລູກຊອງ | Shotgun barrels | 30 |
| 60 | 9305.29 | ອື່ນໆ | Other | 30 |
| 61 | 9306.10 | ລູກປືນສຳລັບຕອກຢ້ຳ ຫຼືສຳລັບເຄື່ອງມືທີ່ຄ້າຍກັນ ຫຼື ສຳລັບປືນຍິງສັດຢາແລະສິ້ນສ່ວນຂອງສິ່ງດັ່ງກ່າວ | Cartridges for riveting or similar tools or for captive bolt humane killers and parts thereof | 30 |
| 62 | 9306.21 | ລູກປືນ | Cartridges | 30 |
| 63 | 9306.29 | - - ອື່ນໆ | - - Other | 30 |
| 64 | 9306.30 | - ລູກປືນອື່ນໆ ແລະ ສິ້ນສ່ວນຂອງລູກປືນດັ່ງກ່າວ | - Other cartridges and parts thereof | 30 |
| 65 | 9306.90 | - ອື່ນໆ | - Other | 30 |
| 66 | 9307.00 | ງ້າວ | Swords | 30 |

| ລ/ດ No | ລະຫັດ HS HS Code | ລາຍການສິນຄ້າເປັນພາສາລາວ | English Description | ອັດຕາພາສີ MFN MFN Tariff 2008 |
|---|---|---|---|---|
| 67 | 9601.10 | - ງາ, ກະດູກ, ຂອງເຕົ່າ, ເຂົາ, ເຂົາກວາງ, ປະກາລັງ (Corail) ເປືອກຫອຍມຸກ (Nacre) ແລະວັດຖຸອື່ນຈາກສັດສຳລັບແກະສະຫຼັກ, ທີ່ເຮັດແຕ່ງແລ້ວ ແລະເຄື່ອງທີ່ເຮັດດ້ວຍວັດຖຸດັ່ງກ່າວ: ງາທີ່ຕົກແຕ່ງແລ້ວ ແລະເຄື່ອງທີ່ເຮັດດ້ວຍງາ. | - Swords, cutlasses, bayonets, lances and similar arms and parts thereof and scabbards and sheaths therefor Worked ivory, bone, tortoise-shell, horn, antlers, coral, mother-of -pearl and other animal carving material, and articles of these materials ( including articles obtained by moulding ) Worked ivory and articles of ivory. | 10 |
| 68 | 9601.90 | - ອື່ນໆ. | - Other. | 5 |
| 69 | 9705.00 | ເຄື່ອງສະສົມ ແລະຂອງຕົວຢ່າງສຳລັບການສະສົມທາງສັດຕະວິທະຍາ, ພຶກສາສາດ, ທໍລະນີວິທະຍາ, ກາຍວິພາກສາດ ຫຼືມີຄຸນຄ່າທາງປະຫວັດສາດ, ບູຮານຄະດີ, ບູຮານຊີວະວິທະຍາ, ຊາດພັນວິທະຍາ ຫຼືບູຮານ. | Collections and collector's pieces of zoological, botanical, mineralogical, anatomical, historical, archaeological, palaeontological, ethnographic or numismatic interest. | 5 |
